## ປວັດສາດທາງການເມືອງ ແລະທາງສາສນາ ຢ່າງຍໍ້ ໆ

ການປົກຄອງໃນປີ-໑໙໗໕-ນັ້ນແມ່ນຣະວ່າງລາວແດງປົກຄອງ ໄດ້ປ່ຽນຊື່ປະເທດລາວມາເປັນປະເທດສາທາຣະນະຣັຖປະຊາທິປະໄຕປະຊາຊົນລາວປົກຄອງດ້ວຍຣະບອບສັງຄົມຄອມມູນິສວຽດນາມເໜືອ ໃນຍຸກຫຼັງນັ້ນສ່ວນປະຊາຊົນລາວ ໃນທຸກຊົນຊາດຈຳເປັນ ໄດ້ເຂົ້າປະກອບສ່ວນພ້ອມທັງຄູບາອາຈານຕາມຜູ້ນຳລາວແດງຮຽກຮ້ອງ ໃຫ້ເຂົ້າປະກອບສ່ວນ-ຖ້າຄົນ ໃດຫຼືຄູບາອາຈານອົງໃດ ບໍ່ຍອມປະຕິບັດຕາມຄົນ ໆ ນັ້ນຫຼືຄູບາອົງນັ້ນ-ເຂົາຖືວ່າເປັນປະຕິການຕ້ານປະຕິວັດຂອງເຂົາ ພວກເຂົາຈະຫຼັບສູນຊີວິດຂ້າເສັຽທັນທີ-ເຊັ່ນທ່ານອາຈານຊາຄຳແດງ ຢູ່ເມືອງສີພັນດອນ -ທ່ານອາຈານອົງນີ້ເປັນພຣະທີ່ປະຊາຊົນລາວ ໃນເຂດພາກໄຕ້ໃຫ້ຄວາມເຄົາຣົບນັບຖືຢ່າງສູງ ພໍພວກລາວຄອມມູນິສ-ຢຶດອຳນາໄດ້ນັ້ນ ເຂົາກໍ່ເຫັນວ່າຖ້າເອົາອາຈານອົງນີ້ເຂົ້າມາຮ່ວມຂະບວນການນຳໄດ້-ກໍ່ຈະເປັນເຫດໃຫ້ຂະບວນການຂອງເຂົາກ້າວຂຶ້ນໄປໄກ-ເຂົາເລີຍໄປຣາທນານິມົນທ່ານອາຈານມາເຂົ້າປະກອບສ່ວນນຳເຂົາແຕ່ທ່ານກໍ່ປະຕິເສດບໍ່ຍອມປະຕິບັດຕາມເມື່ອທ່ານອາຈານບໍ່ຍອມປະຕິບັດຕາມແລ້ວ-ເຂົາກໍ່ເອົາທ້ຽປືນອາກາດຄວາງທ່ານອາຈານອົງນັ້ນ ກໍໄດ້ຫຼັບສູນຊີວິດໄປ-ອີກອົງນຶ່ງຄືທ່ານອາຈານບຸນມາກຢູ່ທີ່ນະຄອນຈຳປາສັກທ່ານອາຈານອົງນີ້-ເພິ່ນເປັນລູກສິດຂອງທ່ານອາຈານໝັ້ນບຸຣິດທັດໂຕແທງປະເທດໄທຍຊຶ່ງໄດ້ສົ່ງລົງໄປເຜີຍແຜ່ສາສນາທັມ ຫຼືພວກເຮົາເອີ້ນວ່າກັມຖານ-ຢູ່ທີ່ປະເທດລາວເຮົາເປັນເວລາ-໓໐-ປີພ່ານມາແລ້ວ-ທ່ານອາຈານອົງນີ້ເປັນພຣະທີ່ປະຕິບັດດີປະຕິບັດຊອບແລະເປັນທີ່ສັກຣະບູຊາຂອງພຸທສາສານິກະຊົນ ຂອງປະຊາຊົນລາວພາກໄຕ້ ແລະອີກອົງນຶ່ງຄືທ່ານອາຈານກວ້າງຢູ່ທີ່ວັດບ້ານໂພນກຸງຕາແສງກຸດຈິກ ເມືອງໂພນທອງກໍ່ຖືກລາວແດງເອົາໄປປະຫານຊີວິດຄືກັນ-ເພາະຍ້ອນວ່າເພິ່ນບໍ່ຍອມປະຕິບັດຕາມ ເຂົາຈຶ່ງຂ້າເສັຽທັນທີ- ໃນເມື່ອລາວແດງຢຶດອຳນາດຣັຖໄດ້ນັ້ນເຂົາຈະຫວັງໄຊ້ທ່ານອາຈານທັງສາມອົງນີ້- ໃຫ້ເປັນປະໂຍດ ໃນສ້ານການເມືອງ-ເຂົາກໍໄປຣາທນາທ່ານອາຈານທັງສາມອົງນີ້ ໃຫ້ເຂົ້າມາປະກອບສ່ວນນຳເຂົາ-ແຕ່ທ່ານອາຈານທັງສາມກໍ່ປະຕິເສດບໍ່ຍອມປະຕິບັດຕາມທ່ານອາຈານທັງສາມອົງນີ້ ເປັນພຣະຜູ້ມີວິຊາຄວາມຮູ້ ເພິ່ນໄດ້ພິຈາຣະນາເຫັນວ່າທິສດີ ໃນການປົກຄອງ ໃໝ່ນີ້ ມັນເປັນວັດຖຸນິຍົມດ້ວນ-ເພິ່ນຈຶ່ງບໍ່ຍອມປະຕິບັດຕາມພວກເຂົາກໍ່ເອົາລູກປືນອາກາໄປຖວາຍດ້ວຍເຫດນີ້ປະຊາຊົນລາວ ໃນຍຸກຫລັງນັ້ນລວມທັງພຣະສົງສາມະເນນ-ບາງອົງຫຼືບາງຄົນກໍ່ໃຈບໍ່ເຂັ້ມແຂງພໍ-ເພາະວ່າຢ້ານທ້ຽປືນອາກາຂອງເຂົາ-ຈຶ່ງຈຳເປັນໄດ້ເຂົ້າປະກອບສ່ວນກັບເຂົາເພື່ອຈະຢູ່ລອດ- ໃນການປະກອບສ່ວນນັ້ນ ກໍໄດ້ແຕ່ຄວາມຮູ້ຄວາມສາມາດຂອງຄົນແຕ່ຣະຄົນ-ຢູ່ທີ່ລາວພາກໄຕ້-ເຊັ່ນແຂວງຈຳປາສັກປາກເຊແລະສີພັນດອນ-ຖ້າຜູ້ ໃດເປັນຄົນເຖົ້າຄົນແກ່ແລະເປັນຄົນບໍ່ມີເຣື່ອມີແຮງ-ພວກເຂົາກໍ ໃຫ້ພາ

ກັບລ້ຽງໝູລ້ຽງໄກ່ແລະປູກຜັກລວມໝູ່ເຣັດນາລວມ ຕາມສະພາບຂອງແຕ່ຣະຄົນ-ອັນນີ້ແລ້ວພວກເຂົາຈຶ່ງເອີ້ນວ່າສະພາບການປະກອບສ່ວນຂອງເຂົາສຳລັບບາງຄົນບໍ່ໄດ້ລ້ຽງໝູລ້ຽງໄກ່ນຳເຂົາເພາະຄົນ ໆ ນັ້ນເປັນຄົນທີ່ບອກໄດ້ໄຊ້ຟັງແລະກໍ່ບໍ່ຕອບໂຕ້ຖຽງຄວາມໃນຣະບອບກາດປົກຄອງຂອງເຂົາຫຼືພວກມີມູນເຊື້ອ ໃນການຕໍ່ຕ້ານມາແລ້ວຄືຄົນ ໆນັ້ນໄດ້ເຄີຽເປັນທະຫານລາວແດງມາກ່ອນຫຼືເປັນທະຫານລາວອິສຣະມາແລ້ວ-ແຕ່ໃຈຂອງເຂົາເຈົ້າບໍ່ໄປຕາມຣະບອບຄອມມຸນິສແກວເໜືອ-ເມື່ອເປັນດັ່ງນີ້ແລ້ວຂ້າພຣະເຈົ້າຂໍບັນຣະຍາຍທາງສາສນາແລະທາງການເມືອງປະປົນກັນໄປຢ່າງຍໍ້ ໆ ດັ່ງຕໍ່ລົງໄປນີ້ຂ້າພະເຈົ້າຂໍຄວາມເຫັນໃຈຈາກທ່ານທັງຫລາຽ ຢ່ານຶກວ່າຂ້າພະເຈົ້ານີ້ມາເຫຼັ້ນການເມືອງມາເວົ້າການເມືອງແລະມາເວົ້າທາງສາສນາ-ແຕ່ຂ້າພະເຈົ້າບໍ່ມີເຈຕນາຢ່າງແທ້ຈິງ-ແຕ່ຂ້າພະເຈົ້າມາເວົ້າໃນຄະນະນີ້ຫຼືມາເວົ້າໃນມື້ນີ້ ພຽງແຕ່ປາກນຳເອົາເລື້ອງໃນການປະສົບປະກາຣ ຊຶ່ງຂ້າພະເຈົ້າໄດ້ຮູ້ໄດ້ເຫັນໄດ້ຍິນໄດ້ຟັງໄດ້ພົບດ້ວຽຕົນເອງແລະກໍໄດ້ຖືກການກະທຳຂອງພວກລາວແດງຄອມມຸນິສທີ່ພວກເຂົາກະທຳຕໍ່ຂ້າພະເຈົ້ານັ້ນບັດນີ້ຂ້າພະເຈົ້າຈະມາເວົ້າຢ້ອນກັບຫຼັງຄືນໄປໃຫ້ທ່ານທັງຫຼາຽໄດ້ຟັງໄດ້ຮູ້ໄດ້ເຫັນປວັດສາດຂອງຊາດລາວເຮົາ ເພື່ອໄດ້ເຫັນພາບອັນຈະແຈ້ງຂື້ນກັບຄວາມເປັນມາຂອງປະຊາຊົນລາວເຮົານັ້ນ ເປັນມາຈັ່ງໃດແນ່ພວກເຮົາຈະໄດ້ເຫັນ ອັນຈະແຈ້ງແລ້ວວ່າລາວກັບໄທຍນັ້ນ ອັນແທ້ຈິງແລ້ວກໍມີສາຽເລືອດດຽວກັນນັ້ນເອງປະຊາຊົນທີ່ເອີ້ນວ່າປະຊາຊົນລາວໃນປະຈຸບັນນີ້ ແລກເລີ້ມເດີມທີ່ ກໍ່ມີຖິ່ນຖານບ້ານເຮືອນ-ຢູ່ແມ່ນ້ຳຫວ່າງໂຫແມ່ນ້ຳແຍງສີກຽງ ຢູ່ຕໍ່ມາກໍ່ຖືກຈັກພັດຈີນ ລຸກໄລ່ລົງມາເປັນດຳຫຼັບແລ້ວກໍໄດ້ມາຕັ້ງຖິ່ນຖານຢູ່ທີ່ໜອງແສປະມານ-໓໐໐-ກວ່າປີ ແລ້ວກໍ່ຖືກຈັກພັດຈີນລຸກໄລ່ລົງມາອີກ-ກໍ່ແຕກກະແຈກກະຈາຽກັນອອກໄປເປັນສາຽໃຫ່ຽສາຽໜຶ່ງ ແລ້ວກໍໄລ່ມາຕັ້ງຖິ່ນຖານຢູ່ຕາມຣິມແມ່ນ້ຳໂຂງ-ສາຽນັ້ນໄດ້ເອີ້ນກັນວ່າໄທຍນ້ອຽຕໍ່ມາໄດ້ເອີ້ນວ່າປະຊາຊົນລາວໃນປະຈຸບັນນີ້-ອີກສາຽນຶ່ງນັ້ນ ໄດ້ມາຕັ້ງຖິ່ນຖານ ຢູ່ຣິມແມ່ນ້ຳເຈົ້າພຣະຍາສາຽນັ້ນໄດ້ເອີ້ນວ່າໄທຍໃຫ່ຽຫຼືເອີ້ນກັນວ່າປະຊາຊົນໄທຍໃນປະຈຸບັນນີ້-ສ່ວນອີກສາຽນຶ່ງຊຶ່ງເປັນສາຽນ້ອຽ ໆ ທີ່ໄດ້ແຕກອອກຈາກສອງສາຽໃຫ່ຽນັ້ນ-ໄດ້ຂ້າມປະເທດພະມ້າເຂົ້າໄປສູ່ປະເທດອິນເດັຽ ໄປເປັນໄທຍອັດສຳ ຫຼືເປັນໄທຍອາຫົມທີ່ປະເທດອິນເດັຽພຸ້ນ ແລະຍັງເຫຼືອຕົກຄ້າງຢູ່ປະເທດພະມານັ້ນໄດ້ເອີ້ນວ່າໄທຍໃຫ່ຽ ມີປະມານ-໓-ລ້ານເສດ ອັນນີ້ແມ່ນປວັດສາດໃນຄວາມເປັນມາໂດຽຍໍ້ ໆ ຂອງປະຊາຊົນລາວ ຂ້າພະເຈົ້າເດົ່າໄດ້ພຽງທໍ່ນີ້ ຫວັງວ່າທ່ານທັງຫຼາຽ ຄົງຈະຊາບແລ້ວວ່າ ລາວແລະໄທຍນັ້ນທີ່ແທ້ກໍ່ມີສາຽເລືອດເນື້ອເຊື້ອໄຂອັນດຽວກັນນັ້ນເອງ-ມາບັດນີ້ຈະກ່າວເລື້ອງທາງສາສນາທີ່ເຂົ້າໄປສູ່ປະເທດລາວນັ້ນ ໄດ້ແບ່ງອອກເປັນສາມຣະຍະ- ໃນຣະຍະແລກນັ້ນເມື່ອປະຊາຊົນລາວໄດ້ເຂົ້າມາຕັ້ງຖິ່ນຖານຢູ່ຕາມຣິມແມ່ນ້ຳໂຂງ-ແລະກໍ່ເອົາເມືອງຄຳທອງຫຼືເອີ້ນກັນ

ວ່ານະຄອນຫລວງພຣະບາງໃນປະຈຸບັນນີ້-ເປັນນະຄອນຫລວງຂອງປະເທດລາວ-ພໍຢູ່ຕໍ່ມາປະມານ ໖໐໐-ປີຜ່ານມາໄດ້ມີກະສັດອົງນຶ່ງອຸບັດຂຶ້ນມາໃນເມືອງຄຳທອງ ຊົງພຣະນາມວ່າ ພຣະເຈົ້າຟ້າງຸ່ມພຣະ ເຈົ້າຟ້າງຸ່ມນີ້ ອຸບັດຂຶ້ນມາ ມີພຣະຊົນບໍ່ຄືຄົນທັງຫຼາຍ ເພາະປາຍລີ້ນເປັນສີດຳພ້ອມແຂ້ວອອກມາມີ ໓໔-ເດັ້ມຄົບທັງຫຼາຍ ເມື່ອເຫັນເປັນດັ່ງນີ້ແລ້ວ ປະຊາຊົນເຫັນວ່າພຣະເຈົ້າຟ້າງຸ່ມນີ້ຖ້າຊີມຢູ່ໄປ ຈະເປັນ ກະລີບ້ານກະລີເມືອງ-ເພາະສະນັ້ນຈຶ່ງໄດ້ພາກັນທຳແພລ່ອງພຣະອົງໄປຕາມລຳແມ່ນ້ຳໂຂງ ໄປຕາມແກ້ງ ຕາມດອນໃນຄະນະນັ້ນ ໄດ້ມີພຣະເຖຣະອົງນຶ່ງ ຊື່ວ່າພຣະມະຫາປາສະມັນເປັນຊາວຂະເມນ ໄດ້ໄປຕັ້ງ ວັດຢູ່ທີ່ດອນໄກ້ເຫົວ ພໍແນມເຫັນແພຂອງພຣະເຈົ້າຟ້າງຸ່ມລ່ອງລົງມານັ້ນ ພຣະມະຫາປາສະມັນ ກໍໄດ້ ເອົາໄມ້ເກາະດຶງເຂົ້າມາຫາຝັ່ງແລ້ວ ທ່ານອາຈານຈຶ່ງໄດ້ລ້ຽງດູອຸປຖັມ ພຣະເຈົ້າຟ້າງຸ່ມຈົນພຣະຊົນອາຍຸ ໄດ້-໑໑-ພັນສາແລ້ວພຣະມະຫາປາສະມັນກໍເລີຍໄດ້ນຳເອົາພຣະເຈົ້າຟ້າງຸ່ມນັ້ນ ໄປຖວາຍແກ່ພຣະເຈົ້າ ແຜ່ນດິນຂະເມນ ພຣະເຈົ້າແຜ່ນດິນຂະເມນ ຈຶ່ງໄດ້ເອົາໄປລ້ຽງດູ ຢູ່ໃນຣາຊວັງຂອງພຣະອົງ ຈົນກະທັ້ງອາ ຍຸໄດ້-໓໑-ພັນສາ-ພໍຕໍ່ມາພຣະເຈົ້າແຜ່ນດິນຂະເມນ ຈຶ່ງໄດ້ຍົກພຣະທິດາອົງນຶ່ງໃຫ້ -ໄດ້ມີນາມວ່າພຣະນາງ ແກ້ວເກງຍາ-ເປັນເອກອັຄມະເຫສີ ພ້ອມທັງມອບກອງທັບ ໃຫ້ນຶ່ງກອງ ພໍພຣະເຈົ້າຟ້າງຸ່ມໄດ້ກອງທັບຈາກ ປະເທດຂະເມນແລ້ວພຣະອົງກໍໄດ້ບຸກເຂົ້າມາຕີປະເທດລາວແລະໄດ້ຍຶດເອົາແຕ່ລະຫົວເມືອງ ໆ ຕຣອດຖົ່ວ ປະເທດແລ້ວກໍໄດ້ມາຕັ້ງເມືອງຢູ່ຖິ່ນເດີມ ຄືເມືອງຄຳທອງນັ້ນເອງ ໃນຕອນນັ້ນ ປະຊາຊົນລາວຍັງບໍ່ທັນໄດ້ມີ ສາສນາເປັນແກ່ນສານ-ເພາະປະຊາຊົນລາວສ່ວນຫຼາຍ ກໍຍັງຖືຜີຟ້າຜີແຖນຢູ່ ຖ້າເຖິງປີເຖິງເດືອນມາກໍພາ ກັນຂ້າສັດເປັນການສັງເຫວີຍພຣະເຈົ້າ-ເມື່ອພຣະນາງແກ້ວເກງຍາ ເຫັນເຊັ່ນນັ້ນແລ້ວ ພຣະນາງແກ້ວເກງ ຍາ ຈຶ່ງໄດ້ໄປຂານທູນພຣະເຈົ້າຟ້າງຸ່ມໃຫ້ໄປນຳເອົາສາສນາມາຈາກປະເທດຂະເມນເຂົ້າມາສູ່ປະເທດລາວ ພຣະເຈົ້າຟ້າງຸ່ມໄດ້ຍິນດັ່ງນັ້ນແລ້ວກໍໄດ້ແຕ່ງເສນາອາໝາດໄປປະເທດຂະເມນເພື່ອໄປຣາທນາເອົາສາສນາ ເຂົ້າມາສູ່ປະເທດລາວພຣະເຈົ້າແຜ່ນດິນຂະເມນ ຈຶ່ງໄດ້ຍົກພຣະບາງໃຫ້-ແລະກໍໄດ້ແຕ່ງຕັ້ງພຣະມະຫາປາສະ ມັນ- ໃຫ້ມາເປັນຫົວໜ້າຄະນະສົງ ພ້ອມດ້ວຍຄະນະສົງອົງນຶ່ງແລ້ວໄດ້ເຂົ້າມາປະຣິດສະຖານໄວ້ທີ່ເມືອງ ຄຳທອງ ແລ້ວກໍໄດ້ປ່ຽນຊື່ເມືອງຄຳທອງນັ້ນມາເປັນນະຄອນຫລວງພຣະບາງ ຕາມຊື່ຂອງພຣະບາງ ທີ່ໄດ້ ພຣະຣາຊທານມາຈາກປະເທດຂະເມນ - ອັນນີ້ແລ້ວເປັນສາຍທີນຶ່ງ-ທີ່ສາສນາເຂົ້າສູ່ປະເທດລາວ ສ່ວນ ສາຍທີສອງນັ້ນ ແມ່ນສາສນາໄປຈາກສຸວັນນະພູມ ຄືປະເທດໄທຍນັ້ນເອງ ສາສນານີ້ເມື່ອເຜີຍແຜ່ເຂົ້າໄປ ສູ່ປະເທດລາວນັ້ນ ແມ່ນເຂົ້າໄປທີ່ນະຄອນວຽງຈັນ ແລ້ວກໍໄດ້ຂຍາຍຕໍ່ໄປໃນປະເທດລາວ ທີ່ພາກກາງ ລາວພາກກາງໃນຄະນະນັ້ນ-ເພິ່ນເອີ້ນວ່າເມືອງມະນຸກຄະນະຄອນ ເມືອງມະນຸກຄະນະຄອນນັ້ນແມ່ນ ເມືອງນະຄອນພຣະນົມໃນປະຈຸບັນນີ້-ຢູ່ທາງທິດ ຝັ່ງຂວາ

ທາງທິດຝັ່ງຊ້າຍແມ່ນເມືອງທ່າແຂກຂອງປະເທດລາວ-ລວມທັງສອງຫົວເມືອງນີ້ ໄດ້ເອີ້ນວ່າເມືອງມະນຸກ
ຄະນະຄອນແລະກໍໄດ້ຂຍາຍຕໍ່ໄປອີກ ກະທັ້ງຈົ່ນຮອດຊາຍແດນຕິດກັບກັບຂເມນເຖິງເຂດກະແຈະຊຽງແຕງ
ຂອງຊາຍແດນຂເມນ-ແລະກໍ່ປ້ອນກັບມາຂຍາຍເຜີຽແຜ່ສາສນາທີ່ນະຄອນຈຳປາສັກ-ອັນນີ້ແມ່ນສາສນາ
ສາຍທີສອງ-ສຳລັບສາສນາສາຍທີສາມແມ່ນໄດ້ແກ່ຄະນະສົງອົງທັມຍຸດ ສາສນາສາຍນີ້ໄປຈາກວັດບໍ່
ວອນນິເວດວິຫານໃນສມັຍຣາຊການທີ-໔-ສາສນາສົງອົງທັມຍຸດນີ້ເມື່ອເຂົ້າສູ່ປະເທດລາວແລ້ວນັ້ນກໍໄດ້
ແບ່ງອອກເປັນສາມສາຍຄືກັນ-ສາຍທີນຶ່ງນັ້ນໄດ້ນຳເອົາໄປປະຣິສຖານໄວ້ເມືອງອຸບົລຣາຊທານີ-ໃຫ້ສູ່ວັດ
ສຸປັທນາຣາມ-ສາຍທີສອງນຳໂດຍເຈົ້າຄຸນອຸບາຣີອຸປະມາຈານສະນິຈັນໂທຈັນ-ໄດ້ນຳສາສນາສົງອົງທັມຍຸດ
ໄປປະຣິສຖານໄວ້ທີ່ນະຄອນຈຳປາສັກ ໃຫ້ສູ່ວັດອາໝາດສະຍາຣາມ-ສ່ວນສາຍທີສາມນຳໂດຍທັ້ນກ່ຳ
ໄດ້ໄປປະຣິສຖານໄວ້ທີ່ເມືອງສີພັນດອນ-ໄດ້ໃສ່ຊື່ວ່າວັດພູເຂົາແກ້ວ ອັນນີ້ຄືປວັດສາດຂອງປະເທດລາວທີ່
ເຖິງເປັນມາໂດຍປ້ໆ ທາງສາສນາເຂົ້າສູ່ປະເທດລາວດ້ວຍເຫດນີ້ສາສນາໃນປະເທດລາວກໍດີ ໃນປະເທດ
ໄທຍກໍດີ-ຈຶ່ງມີອັນນຶ່ງອັນດຽວກັນໂດຍແທ້ແລະບໍ່ມີອັນໃດແຕກຕ່າງກັນເລີຍ-ສ່ວນຄະນະສົງທັງສອງນິກາຍ
ກໍ່ມີຂໍ້ປະຕິບັດອັນນຶ່ງອັນດຽວກັນ-ສ່ວນພຣະສົງທີ່ບວດໃນປະເທດລາວນັ້ນເມື່ອເຂົ້າສູ່ປະເທດໄທຍແລ້ວກໍ່
ເປັນທີຍອມຮັບໃນຂໍ້ຄະນະສັງວາດດ້ວຍກັບກັບຄະນະສົງຂອງລາວແລ້ວບໍ່ຕ້ອງບວດໃໝ່ບໍ່ຕ້ອງຍັດຕິໃໝ່
ແລະບໍ່ຕ້ອງນັບພັນສາໃໝ່-ອັນນີ້ກໍ່ຄືເຫັນໃນຄວາມສຳຄັນຣະວ່າງສາສນາໃນປະເທດໄທຍແລະ
ປະເທດລາວ-[ມາບັດນີ້ຈະກ່າວໄປຫາປວັດສາດລາວແຕ່ກ່ອນຫລັງນັ້ນ-ເປັນມາຈັງໄດແນ່ ສ່ວນໃນປະ
ເທດລາວນັ້ນ ເມື່ອປະຊາຊົນລາວໄດ້ມາຕັ້ງຖິ່ນຖານຢູ່ຕາມລຳແມ່ນ້ຳໂຂງ-ກໍໄດ້ປົກຄອງກັນມາມີແຕ່
ຄວາມຢູ່ເຢັນເປັນສຸກສນຸກສບາຍ ບໍ່ມີເສິກເສືອເໜືອໃຕ້-ມາໄຊ້ອຳນາດຄູ່ເຂັນເຂັ່ນດັ່ງໃນປີ-໑໗໓໕
ມານີ້ ພໍ່ຢູ່ຕໍ່ມາ ໄດ້ມີຈັກພັດຝຣັ່ງເສສ ເຂົ້າມາຄອບຄອງຜືນແຜ່ນດິນລາວໃນປີ-ພ ສ-໑໔໐໙-ເມື່ອຝຣັ່ງ
ເສສມາປົກຄອງລາວນີ້-ຝຣັ່ງໄດ້ບີບບີ້ຈິດໃຈຂອງປະຊາຊົນລາວດ້ວຍບັງຄັບຂົ່ມເຫັງບີບບີ້-ປະຊາຊົນ
ລາວຈຳຕ້ອງໄດ້ເສັຽສ່ວຽສາອາກອນໃຫ້ຝຣັ່ງປີຣະສອງຄັ້ງ ຄັ້ງຣະ-໑໙-ຫລຽນ ຫົວປີມາເຂົາກໍໃຫ້
ເສັຽສ່ວຽສາອາກອນເຂົາເອີ້ນວ່າເສັຽຫົວການທ້າຽປີມາເຂົາເອີ້ນວ່າເສັຽທາງການ-ຖ້າຄົນໃດບໍ່ເສັຽ
ໃຫ້ຝຣັ່ງ-ພວກຝຣັ່ງກໍ່ຈັບເອົາຄົນລາວນັ້ນເຂົ້າຄຸກເຂົ້າຕຣາງແລະເອົາເປັນທາດຂ້ອຽໄຊ້ອັນນີ້ແລ້ວຄືສະ
ພາບໃນການທາຣຸນທີ່ຝຣັ່ງເສສໄດ້ກະທຳມາກັບປະຊາຊົນລາວ-ແຕ່ວ່າເປັນທີ່ແປກປຣາດເຫຼືອທີ່ສຸດນັ້ນ
ເພາະວ່າໃນສມັຍທີ່ຝຣັ່ງເສສມາປົກຄອງຜືນແຜ່ນດິນລາວນັ້ນ ພວກຝຣັ່ງເສສກໍໄດ້ບີບບີ້ຈິດໃຈຂອງປະ
ຊາຊົນລາວຄນາດຈົ່ນເຖິງພຽງທີ່ກ່າວມານີ້- ອັນນີ້ແລ້ວພວກເຮົາຢາກຂໍຖາມສະຫາຍຫົວກ້າວ
ໜ້າແນ່ວ່າ-ມັນເປັນຫຍັງຄົນລາວ ຈຶ່ງບໍ່ໄດ້ອອກຈາກປະເທດຂອງຕົນ-ຄືໃນສມັຍ

ປະຈຸບັນນີ້ ຫຼືໃນປີ-໑໙໗໕-ແຕ່ໃນປີ-໑໙໗໕-ຄືນຫຼັງນັ້ນ ປະເທດລາວມີທ້ອງຟ້າສີຄາມຜ່ອງອຳໄພ ແລ້ວ-ຈົນວ່າຄົນລາວໄດ້ເຫັນແຈ້ງແລ້ວ-ແລະກໍໄດ້ປົດຕົນເອງອອກຈາກແອກໃນ້ແລ້ວ-ພໍຕໍ່ມາເປັນຫຍັງ ຈຶ່ງພາຄົນລາວເຂົ້າໄປສູ່ແອກເດກອີກ ຈົນປະຊາຊົນລາວທັງຫຼາຍປູ່ບໍ່ໄດ້-ຕອ້ງດັ້ງໃຫຼໜີອອກຈາກປະ ເທດຂອງຕົນ ຄົນທີ່ໜີອອກຈາກບ້ານບອ່ນຕົນທີ່ເຄີຍຢູ່ບອ່ນອູ່ທີ່ເຄີຍນອນແລະໄດ້ເຄີຍໝູນໝອນຮຽງຂ້າງ ພັລຍາແລະລູກອອ່ນ-ຈົນວ່າຜົວພັດເມັຽ ເມັຽພັດຜົວລູກພັດພໍ່ພັດແມ່ ຖ້າວ່າໃນສະພາບການເປັນແບບ ນີ້-ຖ້າສົມມຸດວ່າມັນເກີດຂຶ້ນກັບສະຫາຍຫົວກ້າວໜ້າຫຼືຄົນລາວເກີດຢູ່ອາເມຣິກາ ແລະຄົນອາເມຣິກາ ເອງຫຼືຄົນໄທຍກໍ່ຕາມ ພວກທ່ານຈະຄິດຄືແນວໃດ-ສ່ວນຫົວໃຈຂອງຄົນລາວຂອງຄົນຂະເມນແລະຄົນ ວຽດນາມນັ້ນທີ່ພວກເຂົາເຈົ້າອົບຕາຽ ອອກຈາກປະເທດຂອງຕົນ ທີ່ມາອາໃສຜືນແຜ່ນດິນໄທຍຫຼືຜືນແຜ່ນ ດິນອາເມຣິການັ້ນ-ພວກເຂົາເຈົ້າຍັງມີຄວາມຮູ້ສຶກຂອງກັນແລະກັນຄືແນວໃດ-ແລະພວກເຂົາເຈົ້າກໍ່ຍັງໄດ້ ເວົ້າກັນຢູ່ວ່າ ເປັນຫຍັງພວກເຮົາຈຶ່ງໄດ້ອອກຈາກປະເທດຂອງຕົນ [ອັນນີ້ແລ້ວພວກເຮົາຢາກຂໍຖາມວ່າໃນ ຣະບອບການປົກຄອງໃໝ່ຂອງແນວລາວຄອມມຸນິສນີ້-ຖ້າມັນດີອີດີແລ້ວ ເປັນຫຍັງຄົນລາວ ຄົນຂະເມນ ຄົນວຽດນາມ ຈຶ່ງໄດ້ພາກັນໜີອອກຈາກປະເທດຂອງຕົນ-ເພາະຍອັນອັນໃດແລະດວ້ຽເຫດອັນໃດແນ່

[ອັນນີ້ແລ້ວຂ້າພະເຈົ້າຂໍຟາກຄວາມຄິດໃຫ້ທຸກໆ ທ່ານທັງຫລາຽນຳເອົາໄປຄິດເປັນການບ້ານຄິດ:ປັນ ການເມືອງຫຼືວ່າໃຫ້ພວກສະຫາຽຫົວກ້າວໜ້າທັງຫລາຽ ໃຫ້ພາກັນນຳເອົາໄປຄິດເປັນການບ້ານການ ເມືອງເບິ່ງແນ່ແລະພວກເຮົາຢາກຂໍຖາມວ່າ ຖ້າວ່າຣະບອບໃໝ່ນີ້ມັນດີແທ້ ໆ ແລ້ວ ເປັນຫຍັງຄົນລາວຄົນ ຂະເມນຄົນວຽດນາມ ຈຶ່ງພາກັນໜີອອກຈາກປະເທດມັນເປັນເພາະດວ້ຽເຫດໃດກັນແທ້ [ມານັດນີ້ຂ້າ ພຣະເຈົ້າຈະພາທ່ານທັງຫລາຽຢອ້ນໄປເບິ່ງສະພາບການຕໍ່ສູ້ກັບຝຣັ່ງ-ທີ່ຝຣັ່ງເສສມາປົກຄອງຜືນແຜ່ນດິນ ລາວ ໃນວິທີການຂົ່ມຂີ່ຂູດຮີດຂົ່ມເຫັງຢ່າງທີ່ກ່າວມາແລ້ວນັ້ນ-ພໍຕໍ່ມາຈຶ່ງໄດ້ມີຂະບວນການອັນນຶ່ງໄດ້ເກີດ ຂຶ້ນເພື່ອກອບກູ້ເອກຣາຊຈາກຝຣັ່ງ-ໃນຂະບວນການອັນນີ້ໄດ້ເອີ້ນວ່າຂະບວນການລາວອິສຣະ-ທີ່ນຳໂດຽເຈົ້າ ເພຊຣາຊ ເຈົ້າສຸພານຸວົງ ເຈົ້າສຸວັນນະພູມາ ເຈົ້າສີປະເສີດ ພະຍາຄຳມ້າວແລະທ່ານອຸ່ນສະນະນີກອນໄດ້ ລວບລວມພັກພວກຂອງຂະບວນການນີ້ຂຶ້ນ-ເພື່ອຕໍ່ສູ້ຝຣັ່ງເສສ-ຢູ່ທີ່ໜ້າສະຖານີຣົດໄຟຫົວລຳໂພງຂອງ ປະເທດໄທຍນັ້ນເອງໂດຽໄດ້ຕັ້ງຂະບວນການໃນປີ-໑໙໔໕-ແລ້ວໄດ້ອອກໄປຕໍ່ສູ້ຝຣັ່ງເສສຈົນເຖິງປີ-໑໙໕໔- ກົງກັບວັນທີ-໗-ພຶສພາປີ-໘໔໙໗-ຝຣັ່ງເສສກໍ່ໄດ້ພ່າຽແພ້ສົງຄາມຮຽນວຽນຟູແລະໄດ້ຍົກເອກຣາຊໃຫ້ ລາວ-ຂະເມນ ວຽດນາມ-ລາວ ຂະເມນ ວຽດນາມ-ກໍ່ເປັນອັນວ່າ ໄດ້ເອກຣາຊໃນປີນັ້ນ-ເມື່ອຝຣັ່ງເສສໃຫ້ ເອກຣາຊຢ່າງນັ້ນແລ້ວ ລາວຈຳນວນນຶ່ງ ຈຶ່ງມີພະຍາຄຳມ້າວ ເປັນ

ປະທານແລະທ່ານກະຕ່າຽເປັນລອງ

ປະທານ ໃນຄະນະນັ້ນກໍ່ຍອມຮັບເງື່ອນໄຂ-ຕັ້ງຣັຖບານຂຶ້ນຕາມທີ່ຝຣັ່ງເສສໃຫ້ເອກຣາຊ-ເມື່ອເປັນຈັ່ງຊີ້ແລ້ວສຸພານຸວົງກໍ່ເວົ້າວ່າ ເອກຣາຊແບບນີ້ມັນເປັນເອກຣາຊພາຍໄຕ້ເງື່ອນໄຂ ທີ່ຈັກພັດຝຣັ່ງມອບໃຫ້ພວກເຮົາຖືວ່າບໍ່ເປັນເອກຣາຊ-ສຸພານຸວົງກໍ່ເລີຍເອົາຕົວອອກຈາກ ຂບວນການລາວອິສຣະແລ້ວອອກໄປຕັ້ງຂບວນການໃໝ່ໄດ້ເອີ້ນຊື່ວ່າຂະບວນການປະເທດລາວຫຼືເອີ້ນວ່າຂບວນກາຣແນວລາວຮັກຊາດແລະທຸກ ໆ ທ່ານໄດ້ຮູ້ວ່າຂບວນການລາວແດງນັ້ນເອງ-ອັນນີ້ແລ້ວມັນເປັນຜົນເຫດ ເຮັດໃຫ້ລາວທັງສອງຝ່າຍໄດ້ສູ້ຮົບກັນເອງ-ລາວທັງສອງຝ່າຍໄດ້ສູ້ຮົບກັນນັ້ນ ເປັນເວລານານເຖິງ-໒໒-ປີຈຶ່ງເຮັດໃຫ້ເສຖກິດລາວໃນທຸກດ້ານ ໄດ້ເຊື່ອມໂຊມລົງ ເພາະຍ້ອນໃພສົງຄາມນັ້ນບໍ່ວ່າຈະເກີດຂຶ້ນຢູ່ບ່ອນໃດກໍ່ຕາມ ມັນຈະຕ້ອງທຳລາຍເສຖກິດໃຫຍ່ທັງສອງຢ່າງດ້ວຍກັນນັ້ນຄືນຶ່ງ-ທຳລາຍດ້ວຍອຸດສະຫະກຳ ຈະບໍ່ມີຄົນຕ່າງດ້າວທ້າວຕ່າງແດນແຕ່ຣະປະເທດມາລົງທຶນ ເພາະຈະກວາຊາດທຶນຂອງເຂົາເຈົ້າ -ອັນທີ່ສອງນັ້ນໄດ້ແກ່ສົງຄາມຖ້າເກີດຂຶ້ນມັນຈະທຳລາຍດ້ວຍກະສິກຳການເພາະປູກແລະການກະສິກຳຕ່າງ ໆຈະຄ່ອຍເປີດຊຶ້ນລົງທີຣະເລກທີຣະນ້ອຍ-ທາງນີ້ເພາະວ່າພວກຊາວໄຮ່ຊາວນາ ເຂົາເຈົ້າກວາຕາຍ-ບາງບ່ອນກົກເຂົ້າກໍ່ຊ່ຽວກຸ້ມໄປທົ່ວທົ່ງນາທາງທະຫານກໍ່ຍິງກັນຜ່າປ່າເຂົ້າ ໃນບາງບ່ອນກໍ່ຖືກຫາວ່າລ້ຽງລູກນ້ອງຈັກພັດອາເມຣິກາຈຶ່ງພວກພໍ່ໄຮ່ຊາວນາກວາຕາຍ-ຈຶ່ງໄດ້ພາກັນຫຸບລູກຈູງຫຼານ ເຂົ້າໄປຢູ່ໃນເມືອງ-ແລະກໍ່ພາກັນຖິ້ມໄຮ່ຖິ້ມນາໄປບາງບ່ອນຕົ້ນເຂົ້າກໍ່ພວມສຸກເຫຼືອງໄປທົ່ວທົ່ງນາ ຈຶ່ງສິພໍໄດ້ເກັບໄດ້ກ່ຽວຢູ່ແລ້ວແຕ່ສ່ວນປືນ-໖໐ ໓໑-໑໐໕-໑໐໖-ຍິງເຂົ້າມາຕຸ້ມຕ່ຳ ໆ ຈຶ່ງເປັນຟືນໄປໄຟ ໃໝ້ໄປຕາມທົ່ງໄຮ່ທົ່ງນາ-ເມື່ອເປັນເຊັ່ນນີ້ແລ້ວ ກໍ່ມີການອຶດຢາກໃນຄອບຄົວ ຂອງປະຊາຊົນລາວນັ້ນ ປະເທດລາວກໍ່ໄດ້ຕົກຕ່ຳໄປເທື່ອຣະເລກຣະນ້ອຍ ຈຶ່ງກະທັ້ງປະຊາຊົນເບື່ອໜ່າຍສົງຄາມເພາະວ່າມາເບິ່ງແລ້ວມີແຕ່ຄົນລາວຮົບກັນເອງ-ເມື່ອເປັນດັ່ງນີ້ແລ້ວໃນປີ-ພ ສ ໒໕໑໖-ຜູ້ນຳລາວທັງສອງຝ່າຍ-ກໍ່ໄດ້ມາພາກັນເຈຣະຈາຢຸດຕິສົງຄາມເລີກຮົບກັນສາແລ້ວກໍ່ມາເຊັນສັນຍາສົງບເສິກ- ໃນສັນຍາ-໑໕-ມາດຕຣາ ອະນຸສັນຍາ-໒໓-ມາດຕຣານັ້ນທັງສອງຝ່າຍໄດ້ເຂົ້າມາຮ່ວມກັນ-ສ່ວນເນື້ອໃນໃຈຄວາມຂອງສັນຍາແລະອະນຸສັນຍານັ້ນເມື່ອມາວິເຄາະຢ່າງຈະແຈ້ງເບິ່ງແລ້ວ ຈະເຫັນໄດ້ວ່າໃນປະເທດລາວນີ້ ຕ້ອງປົກຄອງດ້ວຍຣະບອບປະຊາທິປະໄຕ ແລະໃຫ້ມີພຣະມະຫາກະສັດເປັນປະມຸກຂອງຊາດ ສ່ວນປະຊາຊົນທັ້ງຫຼາຍກໍ່ໃຫ້ມີສິດໃນການປາກເວົ້າ ໃຫ້ມີສິດໃນການຂີດຂຽນ ໃຫ້ມີສິດໃນການຊຸມນຸມຊົນ ໃນການສະແດງທາງດ້ານການເມືອງ-ແລະໃຫ້ປະຊາຊົນລາວມີສິດທິ-ປາກເຊື່ອຖືໃນສາສນາໃດກໍ່ໄດ້ ອັນນີ້ແລ້ວຄືໃນສັນຍາແລະອະນຸສັນຍາທີ່ລາວທັງສອງຝ່າຍເຊັນກັນນັ້ນ-ດ້ວຍເຫດນີ້ສົງຄາມໃນລາວຕອນນັ້ນກໍ່ເປັນອັນຊິ້ນສຸດລົງ-ຕໍ່ມາກໍ່ມາຕັ້ງຣັຖບານປະສົມຂຶ້ນໂດຍມີເຈົ້າສຸວັນນະພູມາ-ຫົວໜ້າ

ຝ່າຍຂວາເປັນນາຍົກ-ເຈົ້າສຸພານຸວົງເປັນຫົວໜ້າຝ່າຍຊ້າຍແລະເປັນປະທານຄະນະມົນຕຣີປະສົມການ ເມືອງ-ທຳໜ້າທີ່ເໝືອນສະພາຜູ້ແທນຣາສດອນແລ້ວກໍ່ອອກໂຄງການ-ການເມືອງ-໑໓-ຂໍ້ມາສ່ວນໃນໂຄງ ການ-ການເມືອງ-໑໓-ຂໍ້ນັ້ນໄດ້ບອກວ່າມີຖານະຄືກັນກັບຣັຖທັມມູນທີ່ເຄີຍປົກຄອງປະເທດລາວມາ ແລ້ວໃນ-໑໘-ຂໍ້ຄັ້ງຕົ້ນນັ້ນ ເປັນນະໂຍບາຍພາຍໃນປະເທດ-໔-ຂໍ້ຫຼັງນັ້ນເປັນນະໂຍບາຍຕ່າງປະເທດ ແຕ່ຣະຂໍ້ແຕ່ຣະມາດຕຣານັ້ນ ກໍ່ໄດ້ບົ່ງບອກຈະແຈ້ງແລ້ວວ່າ ປະເທດລາວນີ້ ຕ້ອງປົກຄອງດ້ວຍ ຣະບອບ ປະຊາທິປະໄຕແລະໃຫ້ມີພຣະມະຫາກະສັດເປັນປະມຸກຂອງປະເທດ ດ້ວຍເຫດນີ້ ຣັຖບານປະສົມວຽງ ຈັນຂອງເຈົ້າສຸວັນນະພູມາ ຈຶ່ງເປັນທີ່ຍອມຮັບ ຂອງປະຊາຊົນທົ່ວປະເທດ-ເມື່ອເປັນດັ່ງນັ້ນແລ້ວ ທາງລາວ ຝ່າຍຂວາມາແພ້ລາວຝ່າຍຊ້າຍໄດ້ຈັ່ງໃດ ອັນທີ່ແທ້ມັນຈະສເມີກັນ ( ໃນຄຳຕອບທີ່ວ່າລາວຝ່າຍຂົວເສັຽ ໄຊໃຫ້ລາວຝ່າຍຊ້າຍນັ້ນ ) ເນື່ອງຈາກວ່າລາວຝ່າຍຂົວຢູ່ໃນທ່າປະໝາດ ເພາະຖືວ່າສົງຄາມຊິ້ນສຸດ ລົງແລ້ວຢູ່ນຳກັນຈັ່ງຊີ້ກໍ່ດີແລ້ວເພາະທາງຝ່າຍຂວາຄິດແນວນີ້ ສ່ວນບັນດານາຍຮ້ອຍນາຍພັນນາຍພົລ ຂອງຝ່າຍຂວານັ້ນ ກໍ່ມີຄວາມຄິດວ່າ ເຮົາໄດ້ເຄີຍເປັນນາຍຮ້ອຍນາຍພັນນາຍພົລມານີ້ ເພາະເຮົາໄດ້ມີ ຄວາມຮູ້ມາແລ້ວກໍ່ຈຶ່ງໄດ້ມາເປັນນາຍ-ສ່ວນພວກລາວແດງມັນຮຽນຈົບມາຈາກມະຫາວິທະຍາໄລ ໃນປ່າພຸ້ນ-ຖ້າມາປະສົມກັນແລ້ວກໍ່ຄິດວ່າຈະໄດ້ເປັນນາຍມັນຢ່າງແນ່ນອນ ເພາະມັນບໍ່ມີຄວາມຮູ້ ຫຍັງດອກອັນນີ້ແມ່ນທາງຝ່າຍຂວາເພິ່ນຄິດຢາກຈະເປັນນາຍລູກດຽວ ມັນຈຶ່ງເປັນຈັ່ງຊັ້ນໃນຄະນະນັ້ນ ຕໍ່ລົງມາກໍ່ຄືພໍ່ຄ້າຊາວຂາຍໃນປະເທດລາວ ເພິ່ນກໍ່ຖືວ່າ ເລື້ອງການຕໍ່ສູ້ກໍ່ດີ ເລື້ອງການບ້ານການເມືອງກໍ່ ດີ-ມັນເປັນເລື້ອງຂອງເຈົ້າຂອງນາຍເພິ່ນສ່ວນພວກເຮົາພໍເປັນແຕ່ພໍ່ຄ້ານີ້ກໍ່ມີແຕ່ໜ້າທີ່ກອບໂກຍແລະຂູດ ຣີດເລື້ອຍໄປສ່ວນວຽກບ້ານການເມືອງນັ້ນພວກເພິ່ນບໍ່ກ່ຽວ-ອັນນີ້ແລ້ວມັນຈຶ່ງເປັນສະພາບງຽບໄປ- ສ່ວນໜ້າທີ່ ນາຍສີ ນາຍສາ ນາຍມາ ນາງດາ -ນັ້ນກໍ່ຖືວ່າໂຕເປັນພຽງແຕ່ຊາວໄຮ່ຊາວນາ-ສ່ວນປະເທດ ຊາດບ້ານເມືອງໃນຄະນະນັ້ນ ພວກນີ້ກໍ່ຖືວ່າການເມືອງມັນເປັນເລື້ອງຂອງເຈົ້າຂອງນາຍແລະເປັນເລື້ອງຂອງ ອັນຍົມອັນຍາເພິ່ນອັນນີ້ແລ້ວມັນຈຶ່ງກາຍໄປຢ່າງງຽບ -ໃນເຫດການຕ່າງ ໆ ນັ້ນກໍ່ເລີຍເປັນຄວາມຄາດ ໝາຍ ເຂົ້າໄປສູ່ລາວແດງຄອມມຸນິສ-ສ່ວນໜາທີ່ຂອງຄູບາອາຈານ ຢູ່ໃນປະເທດລາວຄາວນັ້ນເພິ່ນຖືວ່າ ການເມືອງ ເປັນເລື້ອງຂອງເຈົ້າຂອງນາຍແລະເປັນເລື້ອງຂອງຍາດຂອງໂຍມ-ເພິ່ນເປັນຄູບາອາຈານກໍ່ຕ້ອງວາງ ຕົວເປັນກາງໄປໃຫ້ສເມີຖ້າທາງຝ່າຍຂວາມາມົນເອົາໄປສຸດບັງສະກຸນກູກໍ່ໄປຖ້າທາງຝ່າຍຊ້າຍມາມົນກູກໍ່ ໄປເພິ່ນຕ້ອງວາງຕົວເປັນກາງໃຫ້ສເມີ-ແຕ່ຄູບາໃນຄະນະນັ້ນກໍ່ບໍ່ຄືກັນ ເພາະວ່າຄູບາຂອງຝ່າຍລາວແດງ ຄອມມຸນິສນັ້ນກໍ່ມີຄືກັນ-ແລະກໍ່ປະປົນກັນຢູ່ໃນແຕ່ຣະວັດຕາມຄຳສັ່ງຂອງຄະນະຂອງເຂົາ-ເພາະວ່າພຣະ ສົງຂອງຝ່າຍລາວແດງຄອມມິສນັ້ນ ເຂົາຖືວ່າວຽກບ້ານການເມືອງນັ້ນມັນເປັນເລື້ອງຂອງທຸກໆ ຄົນ

ເພາະສະນັ້ນພວກນີ້ຈຶ່ງດຶງເອົາພຣະສົງ- ໃນທາງສາສນາຂອງພຣະພຸທເຈົ້າໄປໃນທາງການເມືອງ-ເພື່ອຈະໃຫ້ມັນວຸ້ນວາຍກັນກັບປະຊາຊົນ-ເໝືອນກັນກັບພັກຄອມມູນິສຂອງເຂົາ-ເມື່ອພວກຝ່າຍຂວາມີທ່າທີດັ່ງທີ່ກ່າວມານັ້ນ-ແຕ່ພວກຝ່າຍຊ້າຍເຂົາບໍ່ມີທ່າທີໃຫ້ຝ່າຍຂວາຮູ້ ແຕ່ພວກລາວແດງເຂົາມີຫົວຄິດວ່າຖ້າມາປະສົມກັນກັບຣັຖບານນັ້ນໄຊ້ເພື່ອເອົາເງື່ອນໄຂໃນທາງກາຣເມືອງທີ່ນັ້ນແຕ່ທີ່ຈິງແລ້ວເຂົາຄິດວ່າມຶງກັບກູຈະຢູ່ນຳກັນບໍ່ໄດ້ (ຄຳຖາມວ່າເປັນຫຍັງມັນຈຶ່ງຢູ່ນຳກັນບໍ່ໄດ້ນັ້ນ ) ເຫດທີ່ຢູ່ນຳກັນບໍ່ໄດ້ນັ້ນ ເພາະວ່າສະມາຊິກຂອງທ່ານມາກມີຢູ່ທົ່ວໂລກນັ້ນ-ເຂົາກໍ່ມີຄະຕິເປັນເຄື່ອງຕັດສິນ ໃນການຂັດແຍ້ງນັ້ນເຂົາບອກວ່າມີການຂັດແຍ້ງທາງສອງຢ່າງຫຼືສອງປະການປະການອັນທີນຶ່ງນັ້ນ ກໍຄືບໍ່ເປັນປໍຣະປັກ ສ່ວນຂໍ້ຂັດແຍ້ງໃດທີ່ມີການຂັດແຍ້ງໃນອຸດົມການ-ຂໍ້ຂັດແຍ້ງນັ້ນຈະປະນີປະນອມກັນບໍ່ໄດ້-ຕ້ອງໃຫ້ຕາຍອອກໄປຂ້າງນຶ່ງ ອີກອັນທີສອງນັ້ນໃນຂໍ້ຂັດແຍ້ງໃດແລະດ້ວຍວິທີການໃດ-ແຕ່ອຸດົມການບໍ່ກົງກັນອັນນັ້ນໃຫ້ປະນີປະນອມກັນໄດ້-ບັດນີ້ອົງການທາງຝ່າຍຂວາໃນຄະນະນັ້ນ-ຢຶດໝັ້ນຢູ່ໃນ ທາງສາສນາແລະທາງພຣະມະຫາກະສັດຫຼືດ້ວຍຣະບອບປະຊາທິປະໄຕອັນແທ້ຈິງ ເພື່ອໃຫ້ປະຊາຊົນມີອິສຣະເສຣີ ໃນການທຳມາຫາກິນ ບການພັດທນາຕົວເອງ-ເປັນຂຸນສຶກສັກຕິນານາຍທຶນໄດ້ໃນຄວາມສາມາດຂອງໃຜຂອງມັນ-ສ່ວນອຸດົມການຂອງຝ່າຍຊ້າຍຣະບອບຄອມມູນິສນັ້ນກໍ່ພາກັນທຳລາຍທາງສາສນາທຳລາຍທາງພຣະມະຫາກະສັດແລະທຳລາຍຂຸນສຶກສັກຕິນານາຍທຶນ-ແຕ່ອຸດົມການບໍ່ກົງກັນ ເພາະສະນັ້ນພວກຝ່າຍຂວາຈຶ່ງບໍ່ເຂົ້າໃຈ ນະໂຍບາຍຂອງພວກຝ່າຍຊ້າຍ-ແຕ່ພວກຝ່າຍຊ້າຍເຂົາເຂົ້າໃຈ ພວກຝ່າຍຂວາດີ-ເພາະສະນັ້ນຈຶ່ງໄດ້ເອີ້ນວ່າ ເຂົາຮູ້ເຮົາຮູ້ເຂົາ-ຖ້າຣົບກັນຮ້ອຍຄັ້ງກໍ່ຕ້ອງສະນະຮ້ອຍຄັ້ງ-ຖ້າບໍ່ຮູ້ເຂົາ-ບໍ່ຮູ້ເຮົາ-ຣົບຮ້ອຍຄັ້ງມັນກໍ່ເສັຽຮ້ອຍຄັ້ງ-ເພາະວ່າພວກຝ່າຍຂວາບໍ່ຮູ້ຈັກຝ່າຍຊ້າຍດີພໍ-ເມື່ອເປັນດັ່ງຊີ້ແລ້ວ ເຂົາກໍ່ເຫັນວ່າທາງຝ່າຍຂວາກຳລັງປະໝາດເດີນເລີ້ຢູ່ແລ້ວ-ເຂົາກໍ່ລຸກເລີ້ມຫາວິທີທາງໃນທັນທີ-ພວກນີ້ເຂົາຫາວິທີການແຕ່ໃນທາງສະນະຝ່າຍຂວາຢ່າງດຽວເພາະສະນັ້ນຈຶ່ງເອີ້ນວ່າທາງຝ່າຍຂວາບໍ່ຮູ້ຈັກຝ່າຍຊ້າຍດີພໍ ເພີ່ນຈຶ່ງພາກັນໜັ່ງງຽບຢູ່-ແລ້ວພວກລາວແດງເຂົາເດີນລຸກທັງສອງດ້ານ-ຄືດ້ານທີນຶ່ງນັ້ນ ແມ່ນເຂົາເອົາທາງການເມືອງ-ອີກດ້ານທີສອງນັ້ນເຂົາກໍ່ເອົາທາງເສຖກິດ-ສ່ວນທາງດ້ານການເມືອງນັ້ນເຂົາໃຊ້ວິທີເກບປີນເຂົ້າໄວ້ແລະໃຊ້ໂຄສະນາໃນທາງລັບແລະເປີດ-ຖ້າບໍ່ແພ້ບໍ່ສະນະກໍ່ເລີກ ນີ້ແລະເຂົາກໍ່ພາກັນລຸກທັງສອງດ້ານເລີຍ-ຄືດ້ານທີສອງນັ້ນແມ່ນມັນພາກັນເອົາທາງດ້ານເສຖກິດທາງດ້ານເສຖກິດນັ້ນ ແມ່ນເຂົາໃຊ້ເງິນໃຫ້ໃນແຕ່ຣະເມືອງແຕ່ຣະແຂວງ-ແຂວງຣະ-໑໖-ລ້ານດອນ ໃນສິບຫົກລ້ານນັ້ນເພື່ອເອົາມາຈັດຕັ້ງຂະບວນການຕ່າງໆເຊັ່ນຂະບວນການນັກສຶກສາຂະບວນການກັມກອນ-ຂະບວນການສະຫະພັນຖູ-ຂະບວນຊາວໜຸ່ມແລະ

ຂບວນຮອບສັງຫານຄົນທີ່ບໍ່ເປັນຄອມມູນິສນຳເຂົາ-ສ່ວນຂບວນການເລົ່ານີ້ ເມື່ອມີການຈັດຕັ້ງຂື້ນມາແລ້ວມັນກໍໃຫ້ພາກັນເຄື່ອນໄຫວທາງດ້ານການເມືອງສາກ່ອນ-ໃນທາງດ້ານການເມືອງນັ້ນ ໃຫ້ພາກັນເດີນຂະບວນປະທວງເວົ້າໃຫ້ແຕ່ລະບຸກຄົນຫຼືດ່າຄົນທີ່ບໍ່ມັກລະບອບຄອມມູນິສນຳເຂົາພໍຝ່າຍຂວາຮູ້ວ່າເຂົາທຳຢ່າງນັ້ນແລ້ວ-ກໍ່ວ່າບໍ່ສົມມາພາຄວນ ແລ້ວເພີ່ນກໍ່ປາກພາກັນປານ-ແຕ່ຝ່າຍລາວແດງຄອມມູນິສເຂົາບອກວ່າພວກເຈົ້າຢ່າໄປແຕະຕ້ອງເຂົາໜາ-ເພາະວ່າມັນຈະຜິດສັນຍາຂໍ້ທີສອງໄດ້ເວົ້າວ່າໃນປະເທດລາວນັ້ນໃຫ້ມີສິດທິ ໃນການຮ່ວມຊຸມນຸມຊຸນໃຫ້ມີສິດທິໃນການສະແດງຄວາມຄິດເຫັນຖ້າວ່າພວກທ່ານໄປແຕະຕ້ອງເຂົາ ທ່ານກໍ່ຈະຕ້ອງຍິງກັນໃໝ່-ທາງຝ່າຍຂວາໄດ້ຍິນຈັ່ງຊີ້ແລ້ວ-ກໍ່ເລີຍບໍ່ຫານແຕະຕ້ອງເຂົາແລ້ວກໍ່ພາກັນແນມເບິ່ງຢູ່ເສີຍ ໆ ແຕ່ພວກເຮົາມາພາກັນຖາມກັນເບິ່ງວ່າ ເປັນຫຍັງພວກທະຫານລາວຝ່າຍຂວາມີທັງ-໓-ໝື່ນກວ່າຄົນຈຶ່ງບໍ່ພາກັນປະຕິວັດສາໃນຄະນະນັ້ນ(ອັນນີ້ຈະຕອບວ່າ)ເມື່ອຮູ້ທັນແລ້ວມັນປະຕິວັດບໍ່ໄດ້-ເພາະວ່າໃນຄະນະລາວແດງຄອມມູນິສ ເຂົ້າມາຮ່ວມຢູ່ນັ້ນເມື່ອເວລາເຂົາເຂົ້າມາບຸບເຂົາກໍ່ດຶງເອົາຫຼັກສູດຂອງທ່ານມາກມາໄຊ້ທັນທີເລີຍ ໃນຫຼັກສູດຂອງທ່ານມາກນັ້ນ-ໄດ້ບອກວ່າຫີນສີລາແຜ່ນໜານັ້ນ ຖ້າມີບ່ອນຮອງແຕກແລ້ວ ໃຫ້ພາກັນເອົາຫຼິ້ມຕອກລົງໃສ່ ວັນລະເລກລະບ່ອນເທົ້ານັ້ນ-ສ່ວນຫີນສີລາແຫ່ງນັ້ນ ມັນກໍ່ຈະແຕກອອກຈາກກັນໄດ້ໃນທັນທີ-ສ່ວນບັນດາສັງຄົມຂອງຊົນຊັ້ນນັ້ນມັນກໍ່ຄືກັນ-ເພາະສະນັ້ນມັນກໍ່ຕ້ອງແບ່ງແຍກອອກຈາກກັນໄດ້ ຕາມຫຼັກການຂອງຊົນຊັ້ນຂອງມັນ-ເມື່ອເປັນດັ່ງນັ້ນແລ້ວ ເຂົາກໍໄປແຍ່ເອົາຜົນປະໂຍດ ຂອງນາຍພົລຄົນນັ້ນ ນາຍພັນຄົນນີ້-ສ່ວນນາຍພົລນາຍພັນ ຂອງປະເທດລາວໃນຄາວນັ້ນ ກໍ່ມີການແຕກແຍກກັນເກືອບຢາກເປີດຢູ່ແລ້ວໃນປະເທດ-ແຕ່ວ່າບາງບ່ອນບາງແຂວງນາຍພົລນາຍພັນກໍ່ຍັງມີການສມານສາມະຄີກັນດີຢູ່ບໍ່ເຖິງແຕກແຍກກັນ-ພວກລາວແດງຄອມມູນິສ-ກໍ່ມີນະໂຍບາຍໄປແຍ່ເອົາເມັຽເຈົ້າເມັຽນາຍ ໃຫ້ແຕກແຍກກັນໃຫ້ໄດ້-ສ່ວນເມັຽເຈົ້າເມັຽນາຍທີ່ຢູ່ປະເທດລາວໃນຄາວນັ້ນ-ກໍ່ເປັນເມັຽເຈົ້າເມັຽນາຍແທ້ ໆ ຖ້າຜົວເປັນນາຍພົລຕຣີເມັຽກໍ່ຕ້ອງໄດ້ເປັນນາຍພົລໂທ ເມື່ອເມັຽເຈົ້າເມັຽນາຍແຕກແຍກກັນແລ້ວນັ້ນ-ລາວແດງຄອມມູນິສມັນກໍ່ເບິ່ງອຳນາດໃນການປະຕິວັດຂອງຝ່າຍຂວາ-ແຕ່ທາງຝ່າຍຂວາກໍ່ບໍ່ມີຫຍັງເລີຍແລະກໍ່ບໍ່ກ້າ ປະຕິວັດ-ແລ້ວກໍ່ປ່ອຍປະໃຫ້ເຂົາເດີນຂບວນໄປແຈ້ວແຈວລູກດຽວ-ອັນນີ້ແລ້ວມັນເປັນສາເຫດອັນທີນຶ່ງພາໃຫ້ຝ່າຍຂວາເສັຽໃຈໃຫ້ຝ່າຍຊ້າຍ- ສາເຫດອັນທີສອງນັ້ນ ພວກມັນເບິ່ງທາງເສດຖກິດ-ສ່ວນໃນທາງດ້ານເສດຖກິດນັ້ນ ເຂົາກໍ່ຊື້ສິນຄ້າໃນຕົວເມືອງໃຫ່ຍ ໆ ໄປກັກຕຸນໄວ້ ເພື່ອສ້າງຄວາມປັ່ນປວນໃຫ້ປະຊາຊົນກຽດຊັງຝ່າຍຣັຖບານ-ມັນກໍ່ຮັດຊື້ຂອງປະເທດໄທຍທີ່ສົ່ງໄປຂາຍໃຫ້ປະເທດລາວ ແຕ່ສິນຄ້າຈາກໄທຍເຂົ້າສູ່ປະເທດລາວນັ້ນ ມີຈຳນວນໂຄຕ້າຈຳກັດໃນແຕ່ລະຢ່າງນັ້ນ ເດືອນລະ

ຈັກຕັນ-ເມື່ອສິນຄ້າເຂົ້າສູ່ລາວມັນກໍຣັດຊື້ອອກ-ເມື່ອຊື້ອອກແລ້ວ ຂອງໃນປະເທດລາວມັນກໍ່ແພງຂຶ້ນ ທ່ານທັງຫຼາຍຄິດວ່າ ພວກພັກຄອມມູນິສມັນເອົາເງິນມາແຕ່ໃສມາຊື້ສິນຄ້າ-ເຂົາໄດ້ເງິນມາຈາກໃສນັ້ນ ທ່ານທັງຫຼາຍຢ່າຄິດຍາກ ພວກນີ້ມີເງິນຫຼາຍເຫຼືອເກີນນັ້ນ-ເປັນຫຍັງມັນຈຶ່ງມີເງິນຫຼາຍ ເຫດທີ່ມີເງິນຫຼາຍນັ້ນ-ເພາະກົດໝາຍຂອງ ພັກຄອມມູນິສສາກົນນັ້ນ-ເຂົາໄດ້ບົງບອກຈະແຈ້ງວ່າໃນປະເທດໃດກໍ່ຕາມ ເມື່ອຈະປ່ຽນແປງຫຼືປຽນລະບອບທຶນນິຍົມໄປສູ່ລະບອບສັງຄົມນິຍົມແລ້ວ ປະເທດນັ້ນຈະຕ້ອງເອົາລາຍໄດ້ຂອງປະເທດຂອງຕົນ ໃນຈຳນວນ-໓໐% ເອົາໄປໃຫ້ພັກຄອມມູນິສສາກົນ-ເພືອປົດປ່ອຍໂລກຕໍ່ໄປ ເພາະສະນັ້ນພວກນີ້ຈຶ່ງມີເງິນກອງທຶນຫລາຍເມື່ອເຂົາມີເງິນຫລາຍເຂົາກໍ່ຊື້ສິນຄ້າໃຫ່ຍ ໆໄດ້ເພື່ອໃຫ້ສິນຄ້າໃນປະເທດນັ້ນມັນນ້ອຍລົງ-ແລະຣາຄາສິນຄ້າມັນກໍ່ຕ້ອງແພງຂຶ້ນ ຖ້າມີຄົນເອົາໄປຂາຍໃຫ້ພວກມັນ ພວກມັນກໍ່ຊື້ເອົາໄປກັກຕຸນໄວ້-ສ່ວນພໍ່ຄ້າຊາວຂາຍເອົາໄປຂາຍຈາກເມືອງຕ່າງ ໆນັ້ນ ມັນກໍ່ພາກັນຣັດຊື້ເອົາ-ເພາະສະນັ້ນໃນການຂາຍທົ່ວ ໆ ໄປໃນຄະນະນັ້ນ ເຊັ່ນນ້ຳຕານກິໂລນຶ່ງ-໑໐໐-ກີບ ມັນກໍ່ຊື້-໓໐໐ ກີບສ່ວນເຂົ້າສານກະສອບໜຶ່ງ-໓໐໐໐-ກີບ ມັນກໍ່ຊື້-໗໐໐໐-ກີບຊື້ແລ້ວມັນກໍ່ເອົາໄປໄວ້ຢູ່ໃນປ່າປ່າແຫ່ງນັ້ນຊື່ວ່າເຊຄຳພໍເຊຄຳພໍນີ້ ຕັ້ງຢູ່ລາວພາກໄຕ້ ອັນນີ້ເປັນນອບຕັ້ງຂອງພັກຄອມມູນິສສາກົນພັກຄອມມູນິສສາກົນເອີ້ນວ່າຣູບການເມືອງ-ພັກຄອມມູນິສສາກົນຣູບເສຖກິ ເອີ້ນວ່າສາກົນກຳມະຊົນ-ຣູບທາງທະຫານເອີ້ນວ່າກອງກຳລັງສາກົນ ໃນນັ້ນມີໄທຍລາວ ຂເມນ ວຽດນາມ ປະສົມກັນຢູ່ ໂດຍມີນາຍພົລຂອງວຽດນາມເປັນຜູ້ບັງຄັບບັນຊາຢູ່ຫັ້ນ ມີຊື່ຢູ່ສາມຊື່-ຊື່ບັງຄັບກອງທັບວຽດນາມ ຊື່ວ່ານາຍພົລຫງຽນບັນຖອນ ຊື່ບັງຄັບກອງທັບສາກົນ ຊື່ວ່ານາຍພົລດຶກຊື່ບັງຄັບປົດປ່ອຍປະຊາຊົນໄທຍຊື່ວ່ານາຍພົລເຫຼືອງຄົນນີ້ມີນັດປະຊາຊົນ ຂອງທັງສາມປະເທດຢ່າງລຽນລ້ອຍເພາະວ່າຄົນນີ້ເກີດຢູ່ອຳເພີເຄື່ອງໃນ ຈັງຫວັດອຸບົລຣາຊທານີ-ອັນນີ້ແລ້ວຄືຫົວໜ້າໃຫ່ຍທີ່ເຂົາຣັບຊື້ຂອງອອກບໍ່ອັ້ນ ຖ້າໃຜເອົາໄປຂາຍໃຫ້ມັນ ມັນກໍ່ຊື້ແຕ່ຖ້າເປັນປະຊາຊົນທັມດາແລ້ວ ມັນຊື້ແລ້ວກໍ່ແລ້ວໄປ ແຕ່ຖ້າເປັນຂ້າຣາຊການຫຼືເຖົ້າແກ່ໃຫ່ຍ ໆ ນັ້ນເອົາໄປຂາຍໃຫ້-ພໍມັນຊື້ແລ້ວມັນກໍ່ຈົດເອົາຊື່ແລະນາມສະກຸນພ້ອມທີ່ຢູ່ໄວ້ແຕ່ຖ້າເປັນນາຍກໍ-ນາຍຊໍ-ພາກັນເອົາໄປຂາຍໃຫ້ພວກມັນ-ມັນກໍ່ບໍ່ວົນ-ສ່ວນຂ້າຣາຊການຕ່າງ ໆ ໃນປະເທດລາວຕອນນັ້ນ ເຫັນວ່າໄດ້ກຳໄລຫຼາຍ-ກໍ່ພາກັນງັດໂກດັງສິນຄ້າແລ້ວພາກັນໃຫ້ເມັຽເອົາໄປຂາຍຫືຣຕົນເອງກໍມີ-ສ່ວນໝໍອົງດຶກມັນຊື້ເອົາທັນທີ ຊື້ແລ້ວມັນກໍ່ຈົດຊື່ໄວ້ ໃນວັນທີທີ່ນັ້ນໄດ້ມີເຈົ້າແຂວງຫຼືຂ້າຣາຊການ ໃນກອງທັບຂອງຣັຖບານຝ່າຍວຽງຈັນເອົາໄປຂາຍໃຫ້ ແລະໄດ້ເງິນທໍ່ນັ້ນ-ພວກມັນກໍ່ພາກັນຈົດຊື່ໄວ້-ເມື່ອເຂົາຊື້ຂອງອອກຫຼາຍແລ້ວ ມັນກໍ່ເປັນໄປຕາມເສຖກິດ-ສ່ວນຫຼັກເສຖກິດນັ້ນມີຢູ່ວ່າ ເມື່ອກົດສເນີມີນ້ອຍ ກົດສນອງມີຫຼາຍ ຣາຄາກໍ່ຕ້ອງແພງ

ໝາຍຄວາມວ່າເຂົາຕ້ອງການໃຫ້ຂອງມີນ້ອຍ ແຕ່ຄົນໃຊ້ມີຫຼາຍ ຣາຄາກໍ່ແພງຂຶ້ນ ເຊັ້ນປາສະໃດ່ນຶ່ງ ຂອງດຽວນີ້ມັນມີຫຼາຍຂອງ ຂາຍໄດ້ຂອງລະ-໑໐໐-ກີບຖ້າມີນ້ອຍຣາຄາກໍ່ຕ້ອງແພງຂຶ້ນເຖິງຂອງລະ-໕໐໐ ກີບ ອັນນີ້ແລ້ວເຂົາເອີ້ນວ່າກົດສເນີມັນນ້ອຍກົດສນອງມັນຫຼາຍ-ຣາຄາກໍ່ຕ້ອງແພງອັນນີ້ແມ່ນຫຼັກການ ເສຖກິດມັນເປັນຈັ່ງຊີ້ ເມື່ອພວກເຂົາຊື້ເອົາຂອງອອກມາຫຼາຍແລ້ວຂອງມັນກໍ່ຕ້ອງແພງຂຶ້ນ-ສ່ວນເຂົ້າສານ ນັ້ນຊື້ຂາຍກັນທົ່ວ ໆ ໄປທຳມະດາແລ້ວກະສອບນຶ່ງພຽງແຕ່ເຈັດພັນກີບ-ແຕ່ວ່າເຂົາຊື້ອອກຫຼາຍແລ້ວເຂົ້າ ສານມັນກໍ່ຂາດຕຣາດແລ້ວເຂົ້າສານມັນກໍ່ແພງຂຶ້ນ ເປັນຣາຄາຈາກເຈັດພັນກີບ-ກໍ່ເປັນສິບສາມພັນກີບ ໃນບັດນີ້-ມາເວົ້າເຖິງຂ້າຣາຊການຜູ້ນ້ອຍ ທີ່ທຳງານເດືອນໜຶ່ງມີພຽງນຶ່ງໝື່ນຫົກພັນກີບເຮັດວຽກທັງເດືອນ ມັນກໍ່ຊື້ເຂົ້າກິນບໍ່ໄດ້-ອັນນີ້ແລ້ວມັນຈຶ່ງປັ່ນປ່ວນກັນວຸ້ນວ່າຍຂຶ້ນມາ-ພໍເກີດຄວາມວຸ້ນວາຍກັນຂຶ້ນມາ ແລ້ວ ມັນກໍ່ເປັນເງື່ອນໄຂໃຫ້ແກ່ຝ່າຍການເມືອງ-ແລ້ວອົງດຶກຊຶ່ງເປັນຫົວໜ້າຂອງພັກຄອມມຸນິສສາກົນ ນັ້ນ ມັນກໍ່ສົ່ງຫຼັກຖານຕ່າງ ໆ ທີ່ພວກເຈົ້າເມືອງເຈົ້າແຂວງແລະຂ້າຣາຊການຕ່າງ ໆ ໄດ້ເອົາຂອງໄປຂາຍໃຫ້ ພວກພັກຄອມມຸນິສສາກົນນັ້ນ-ມັນກໍ່ເອົາເອກສານຫຼັກຖານ ມາໃຫ້ພວກຝ່າຍລາວແດງ-ພວກລາວ ແດງມັນກໍໄດ້ເອກສານຫຼັກຖ້ານແລ້ວ ມັນກໍ່ເອົາສົ່ງໄປໃຫ້ພວກນັກສຶກສາ ວ່າຫ້ວເອີນບາງເອີນໃນເລື້ອງ ທີ່ຂອງຣາຄາແພງນັ້ນມັນເປັນນຳພວກເຈົ້າເມືອງເຈົ້າແຂວງແລະເປັນນຳພວກນາຍທຶນຕ່າງ ໆ ພ້ອມທັງຂ້າ ຣາຊການທາງຝ່າຍຣັຖບານມັນໄດ້ພາກັນເອົາຂອງໄປຂາຍໃຫ້ພວກບໍຣິສັດສາກົນ-ເພາະສະນັ້ນຂອງມັນຈຶ່ງ ແພງຂຶ້ນ-ແລ້ວໃຫ້ພາກັນເດີນຂະບວນໄລ່ພວກມັນອອກໄປ-ສ່ວນພວກນັກສຶກສາກໍ່ພາກັນມາຮ່ວມຊຸມ ນຸມກັນປຸກຣະດົມມວນຊົນ ແລ້ວມາຍົກເອົາເລື້ອງເຈົ້າເມືອງເຈົ້າແຂວງແລະຂ້າຣາຊການຕ່າງ ໆ ພ້ອມທັງ ນາຍທຶນຢູ່ໃນເມືອງປາກເຊແລະເຂດເມືອງອື່ນໆ ທີ່ເອົາຂອງໄປຂາຍໃຫ້ພັກຄອມມຸນິສສາກົນ ຢູ່ທີ່ເມືອງເຊ ຄຳພໍນັ້ນມັນກໍ່ວ່າຫ້ວນັ້ນນາຍນີ້ໄດ້ເງິນເມືອທີ່ນັ້ນແລ້ວມັນກໍ່ປະກາດສົ່ງປຸກຣະດົມ ໃຫ້ປະຊາຊົນຊານ ແລະນັກສຶກສາ-ໃຫ້ພາກັນໄປໂຄສະນາຂຶ້ນ ພໍຕໍ່ມາພວກນັກສຶກສາກໍ່ພາກັນລວບລວມກັນແລ້ວ ກໍ່ພາ ກັນເດີນຂະບວນໄລ່ພວກເຈົ້າເມືອງເຈົ້າແຂວງອອກພໍພວກເຈົ້າເມືອງເຈົ້າແຂວງອອກໄປປັນ-ພວກລາວແດງ ຄອມມຸນິສ ກໍ່ພາກັນຈັດຕັ້ງຄົນຂອງມັນຂຶ້ນແທນປັນ-ແລ້ວຕໍ່ມາກໍ່ມາພາກັນເດີນຂະບວນໄລ່ພໍ່ບ້ານຕາ ແສງອອກເຂົາເຮັດໄດ້ຈັ່ງຊີ້ຈົນທົ່ວປະເທດ-ສ່ວນອຳນາດບໍຣິຫານທ້ອງຖິ່ນ ກໍ່ຕົກຢູ່ໃນກຳມືຂອງຝ່າຍຊ້າຍ ເປີດແລ້ວ-ມາເຫຼືອແຕ່ນະຄອນຫລວງວຽງຈັນ ຊຶ່ງເປັນແກ່ນກາງຂອງຣັຖບານເຂົາກໍໃຫ້ບັນດາຂ້າຣາຊການ ຜູ້ນ້ອຍເດີນຂະບວນປະທ້ວງ ຂັບໄລ່ບັນດາອະທິບໍດີແລະຫົວໜ້າພະແນກການອອກໄປໃຫ້ເປີດແລ້ວ ພວກລາວແດງກໍ່ພາກັນມາຕັ້ງຄົນຂອງເຂົາຂຶ້ນແທນປັນ-ເຂົາທຳໄດ້ຈັ່ງຊີ້ແລ້ວຝ່າຍປະສົມຣັຖບານ ວຽງຈັນ-ຂອງເຈົ້າສຸວັນນະພູມາ ກໍ່ເລີຍກາຍມາເປັນຫຸ່ນຕົວນຶ່ງນັ້ນເອງ-ອັນນີ້ຣະຄື

ຄວາມຜ່າຽແພ້ ທາງດ້ານການເມືອງຢູ່ໃນລາວໃນຄາວນັ້ນ-ສ່ວນຂເມນແລະວຽນນາມ-ແພ້ທາງດ້ານທະຫານ ສ່ວນລາວນັ້ນແພ້ທາງການເມືອງຈົ່ນສຽງປືນບໍ່ແຕກພໍສຽງປືນແຕກບາດດຽວກໍ່ເສັຽໂລດເມື່ອອຳນາດບໍຣິຫານ ຕົກຢູ່ໃນມືຂອງຝ່າຽຊ້າຽເປີດແລ້ວ-ຕໍ່ມາໃນວັນທີ-໑໙-ເດືອນ ພຶສພາປີ-໘໕໑໗-ນັ້ນເຈົ້າກໍ່ປະກາດໃຫ້ທະຫານລາວທັງສອງຝ່າຽເຂົ້າມາປະສົມກັນສາ-ແຕ່ກ່ອນນັ້ນເລີກຣົບກັນແລ້ວແຕ່ຢູ່ໃນທີ່ໝັ້ນຂອງໃຜຂອງມັນຢູ່ມາບັດນີ້ໃຫ້ມາປະສົມກັນແລະໃຫ້ມາຢູ່ດ້ວຽກັນທຸກຄົນກໍ່ໄດ້ພາກັນມີມົນທ່ານອາຈານ ອົງນຶ່ງຜູ້ທີ່ສຳຄັນ ທາງການເມືອງໃຫ້ໄປເປັນສັກຂີພິຍານໃນການເຂົ້າຣ່ວມ ຂອງທະຫານລາວທັງສອງຝ່າຽ-ສ່ວນຄູບາອາຈານທັງຫຼາຽ ພ້ອມທັງປະຊາຊົນທົ່ວເມືອງນັ້ນ-ກໍ່ພາກັນດີອົກດີໃຈແລະພູມໃຈເພາະວ່າເຫັນທະຫານລາວທັງສອງຝ່າຽ-ໄດ້ມາປະສົມມັນກໍ່ຈົບກໍ່ງາມແທ້ ໆ ສ່ວນທາງຝ່າຽຊ້າຽກໍ່ໃສ່ເຄື່ອງສີຂຽວ ພອມອາວຸດປະຈຳຕົວ ກໍ່ມີປືນອາກາອາພີຈີ ສ່ວນທາງຝ່າຽຂວາກໍ່ແຕ່ງເຄື່ອງສີກາກີມີອາວຸດປະຈຳຕົວມີປືນແອມ-໑໙-ແອມ-໗໑-ປືນໃຫ່ຽພ້ອມຣົດຊາຣົດຄັງ-ສ່ວນເຄື່ອງອາວຸດນັ້ນກໍ່ມີແຕ່ອັນດີ ໆ ແລະກໍ່ພາກັນແຕ່ງເຄື່ອງມີແຕ່ອັນງາມ ໆ ແລ້ວກໍ່ມີປ້າຽຄຳຂວັນແຫ່ກັນເຂົ້າມາ ທາງຝ່າຽຊ້າຽກໍ່ມີປ້າຽຄຳຂວັນຂ້າງນຶ່ງ ທາງຝ່າຽຂົວກໍ່ຖືປ້າຽຄຳຂວັນຂ້າງນຶ່ງ ແຕ່ມີຄຳຂວັນໃນປ້າຽນັ້ນ ໄດ້ຂຽນບອກວ່າປະເທດລາວ ສັນຕິພາບ ເອກຣາຊ ເປັນກາງ ປະຊາທິປະໄຕ ເອກພາບ ວັທນາຖາວອນ-ມີແຕ່ຄວາມມ່ວນ ໆ ໃນປ້າຽຄຳຂວັນຂອງພວກເຂົາ ເຈົ້ານັ້ນເມື່ອໄດ້ເຂົ້າປະສົມປະສານກັນແລ້ວ-ທັງຄູບາອາຈານພ້ອມປະຊາຊົນທັງຫລາຽກໍ່ໄດ້ອ່ວຽໜ້າເຂົ້າຫາກັນແລ້ວ ກໍ່ນິມົນອາຈານອົງນຶ່ງທີ່ສຳຄັນໃນນັ້ນ ໃຫ້ແປຄຳຂວັນໃຫ້ຟັງ ທ່ານອາຈານກໍ່ໄດ້ພະຍາຍາມແປໃຫ້ພຣະສົງແລະປະຊາຊົນທັງຫຼາຽໄດ້ຟັງແລະໃຫ້ຊາບຢ່າງຈະແຈ້ງວ່າ- ໃນຄຳວ່າປະເທດນີ້ ແມ່ນປະເທດແລະຂອບເຂດຫຼືແດນດິນ ອັນນີ້ຈຶ່ງເອີ້ນວ່າປະເທດ-ຖ້າໃນລັກສະນະວ່າປະເທດນັ້ນຕ້ອງປະກອບໃນຄຸນສົມບັດສາມປະການນັ້ນກໍ່ຄື ປະການອັນທີນຶ່ງເປັນປະເທດໃນລັກສະນະປວັດສາດ-ປວັດສາດໃນຄວາມເປັນມາຂອງຊົນຊາດລາວ ປະການອັນທີສອງ ຄືເປັນປະເທດໃນລັກສະນະພູມີສາດ-ພູມີສາດໄດ້ແກ່ປະເທດລາວນັ້ນທາງທິດເໜືອຕິດ ພະມ້າ ກັບຈີນ ທາງທິດຕາເວັນອອກຕິດກັບວຽດນາມ ທາງທິດໄຕ້ຕິດກັບຂເມນ-ທາງທິດຕາເວັນຕົກຕິດກັບປະເທດໄທຍ-ແຜ່ນດິນລາວມີພື້ນທີ່ຢູ່ສອງແສນສາມມື່ນຫົກພັນເຈັດຮ້ອຽຕຣາງກິໂລແມດ-[ປະການອັນທີສາມເປັນປະເທດໃນລັກສະນະອັນປະທັມໃນລັກສະນະອັນປະທັມນັ້ນໄດ້ແກ່ຊີວິດອັນແບບແຜນ ຂອງປະຊາຊົນລາວ-ມີດັ່ງຕໍ່ລົງໄປນີ້ -ຄືຜູ້ຍິງລາວຕ້ອງໜຸ່ງສິ້ນໃໝ ໃສ່ເພບ່ຽງເກົ້າຜົມຽງ່ຽແລະໜຸ່ງສິ້ນຄົງ-ສ່ວນສິ້ນໃໝນັ້ນຕ້ອງໃຫ້ມີຫົວມີຕີນ-ຄົນລາວຕ້ອງນັ້ນເຂົ້າໜຽວຈ້ຳປາແດກ ຈ້ຳກ້ອຽຈ້ຳລາບກິນກັບຈັ່ງຊີ້ ຈຶ່ງເອີ້ນວ່າຄົນລາວປະການອັນທີສີ່-ຈະກ່າວເຖິງເລື້ອງສັນຕິພາບພາຽນອກ

ສ່ວນສັນຕິພາບພາຽນອກນັ້ນໝາຽເຖິງຄວາມສົງບສຸກ ໃນຄວາມສົງບສຸກນັ້ນ ໝາຽຄວາມວ່ານັບແຕ່ນີ້ຕໍ່ໄປສຽງປືນມັນຈະບໍ່ມີອີກແລ້ວ-ຢູ່ໃນປະເທດລາວແລະການປະຫັດປະຫານ ຂ້າຟັນຣັດແທງແລະຂ້າລ້າງໂຄດກັນມັນຈະບໍ່ມີອີກແລ້ວໃນຜືນແຜ່ນດິນລາວນີ້-ອັນນີ້ແມ່ນເປັນສັນຕິພາບພາຽນອກ

ສ່ວນສັນຕິພາບອັນທີສອງນັ້ນ ໝາຽເຖິງຄວາມສົງບສຸກທາງພາຽໃນ-ໃນຄວາມສົງບສຸກພາຽໃນນັ້ນໝາຽເຖິງທາງສ້ານຈິດໃຈ ເມື່ອທຸກຄົນບໍ່ຄິດຂ້າກັນບໍ່ຄິດເອົາປຽບເອົາຣັດກັນ-ບໍ່ຄິດປະຫັດປະຫານກັນແລະບໍ່ຄິດບຽດບຽນ ຊຶ່ງກັນແລະກັນແລ້ວ-ໃນຄວາມຮົ່ມເຢັນເປັນສຸກທາງສ້ານຈິດໃຈແລະທາງດ້ານຫ່າງກາຽມັນກໍ່ມີຂື້ນລວມແລ້ວກໍ່ເອີ້ນວ່າສັນຕິພາບ-ໃນນັ້ນທຸກໆ ຄົນກໍ່ມີໜ້າຊື່ນຕາບານເພາະວ່າບໍ່ມີຄວາມຢ້ານກົວອັນໃດເລີຽ-ທຸກຄົນກໍ່ເບື່ອບ່າຽສຽງປືນຢູ່ແລ້ວແຕ່ໃນປະຈຸບັນນີ້ ສ່ວນສັນຕິພາບທີ່ໄດ້ກ່າວມານັ້ນ-ມັນກາຽໄປເປັນສັນພ້າອີໂຕ້ມາໂງເຊົ້າໃສ່ຫົວຄົນລາວໄປແລ້ວ-ຖ້າເອົາສັນຫົວໃຜກໍ່ແຕກໄປຄືກັນ ຫຼືມັນເອົາສັນຫົວຄູອາຈານກໍ່ແຕກໄປຄືກັນ-ຕໍ່ມາມັນກໍ່ເອົາມາສັນຫົວພວກນັກສຶກສາພວກລູກສິດລູກຫາ-ພອ້ມຄະນະສະຫະພັນຄູແລະກັມະກອນພອ້ມທັງຂ້າຣາຊການຜູ້ນອ້ຽ-ຄືພວກທີ່ພາກັນເດີນຄະບວນເອົາເຊົາເຊົ້າມານັ້ນດວ້ຽຖ້າຜູ້ໃດໜີບໍ່ທັນກໍ່ຖືກສັນຕິພາບຈອມປອມສັນຫົວຈົ່ນແຕກໄປເລີຽ-ອັນນີ້ແລ້ວມັນເປັນສັນຕິພາບ-ອອກຈາກພວກລາວແດງຄອມມຸນິສວຽດນາມ ຕໍ່ມາກໍ່ໄດ້ມີທະຫານລາວແດງຄົນນຶ່ງ ໄດ້ນຳເອົາໜັງສືຫົວນຶ່ງມາໃຫ້ເບິ່ງແລະໃຫ້ອ່ານ ພໍອ່ານໄປແລ້ວໃນໜັງສືຫົວນັ້ນ ແມ່ນໜັງສືມະຕິການຈົນຂວຽພຣະສົງລາວໃຫ້ແບ່ງແຍກກັນຂຽນໂດຽມະຫາຄຳຕັນເທບມູຣີຣຽນປະໂຍກ- ໙ -ໄປຈາກວັດທົນບູຣີປະເທດໄທຍ-ຕໍ່ມາພວກລາວແດງມັນພາກັນເອົາໄປເຮັ້ນຈອ້ຽຢ່າງບໍ່ເຫັນຮອ່ງຮອຍເລີຽ-ພໍພວກມັນໄດ້ເອົາໜັງສືຫົວນີ້ມາໃຫ້ອ່ານແລ້ວໃນໜັງສືຫົວນີ້ທາງໜາມີປະມານ-໔໐-ໜ້າແຕ່ເນື້ອໃນໃຈຄວາມຂອງໜັງສືຫົວນີ້ -ໄດ້ບອກວ່າພຣະສົງລາວກໍ່ຄືບຸກຄົນທີ່ກຳລັງນຸ່ມແໜ້ນນັ້ນ-ຈະສາມາດປະກອບສ່ວນໃນການສ້າງສາພັທນາປະເທດຊາດບ້ານເມືອງໄດ້ ແຕ່ເນື້ອໃນໃຈຄວາມມີທໍ່ນີ້-ພໍຕໍ່ມາ ພວກເຮົາກໍ່ມາພາກັນວິເຄາະເບິ່ງວ່າ-ໃນການປະກອບສ່ວນນີ້ມັນສິແມ່ນອີຫຍັງແລະພວກມັນຕອ້ງການອັນໃດແນ່ ແລະອັນໃດມັນວ່າໃຫ້ພາກັນປະກອບສ່ວນນີ້ ແຕ່ຖ້າມາຄິດເບິ່ງແລ້ວວ່າໃນການປະກອບສ່ວນນັ້ນ ແມ່ນພວກມັນໃຫ້ຄູບາອາຈານລາວເຮົາ ພາກັນລ້ຽງໝູລ້ຽງເປັດລ້ຽງໄກ່ພາກັນປູກຜັກແລະໃຫ້ຫາກຸ້ມຕົນເອງ ອັນນີ້ແລ້ວທີ່ມັນເວົ້າວ່າການປະກອບສ່ວນ ຂອງພວກລາວແດງຄອມມຸນິສນັ້ນຖ້າວ່າມັນຈະເປັນຈັ່ງຊີ້ແລ້ວ ພວກຄົນລາວເຮົາເປີດທັງປະເທດຈະບໍ່ໄດ້ສນັບສນຸນພວກມັນດອກ-ແຕ່ວ່າຄົນລາວເຮົາແປຄວາມໝາຽຂອງພວກລາວແດງບໍ່ໄດ້ແທ້ໆໃນຄຳວ່າປະກອບສ່ວນນັ້ນ-ຕໍ່ມາກໍ່ໄດ້ມີຄົນສຳຄັນອີກຄົນນຶ່ງໄດ້ຖືໜັງສືຫົວນຶ່ງ

ເຂົາໄປຫາອາຈານອົງທີ່ສຳຄັນຢູ່ໃນວັດນັ້ນ-ຄົນ ໆ ນັ້ນຄືນາງພົນຄຳໄຕສີພັນດອນນັ້ນເອງ-ທ່ານອາຈານ
ອົງນັ້ນໄດ້ຖາມວ່າໃນການປະກອບສ່ວນນັ້ນມັນໝາຍຄວາມວ່າຈັ່ງໃດ-ທາງສະຫາຍຄຳໄຕໄດ້ຕອບວ່າ
ພວກທ່ານຈະຕ້ອງເຮັດທຸກຢ່າງນັ້ນແລ້ວເຂົາໃຫ້ຄຳຕອບທີ່ນີ້-ບັດນີ້ຈະມາກ່າວໃນການສຳມະນາໃນເລື້ອງ
ການສຳມະນານັ້ນມັນບໍ່ມີຄວາມໝາຍຫຍັງດອກພີ່ນ້ອງເອີຍ-ມີແຕ່ພວກລາວແດງຄອມມຸນິສມັນມີ
ແຕ່ໃຫ້ພາກັນດ່າອາເມຣິກາ-ດ່າໄທຍ-ດ່າຣະບົບຂຸນສຶກສັກດີນາບາງທີນ-ສ່ວນໃນນາມພັກຄອມມຸນິສ
ນັ້ນ ມັນບໍ່ມັກສອງປະເພດ-ຄືປະເພດອັນທີນຶ່ງນັ້ນ ຄົນທີ່ຮູ້ກ່ອນອ່ານ ພວກມັນກໍ່ບໍ່ມັກ-ປະເພດອັນທີ
ສອງນັ້ນ ກໍ່ຄືຄົນທີ່ຝັນກ່ອນຫຼັບນັ້ນພວກມັນກໍ່ບໍ່ມັກ ແຕ່ພວກມັນມັກນັ້ນ ແມ່ນມັນມັກພວກທີ່ຕີຫຼົບ
ທົບໄດ້ແລະບອກໄດ້ໄຊ້ຟັງ ພວກມັນຈຶ່ງມັກ-ປະເພດຮູ້ກ່ອນອ່ານນັ້ນ ປຽບຢ່າງຄືມື້ນີ້ ຫຼືເວລານີ້ ຊິມີຄົນ
ມາເວົ້າເລື້ອງການເມືອງມາໂຄສະນາຢູ່ທີ່ນີ້ໃຫ້ທ່ານທັງຫຼາຍໄດ້ຟັງແຕ່ວ່າພວກຫົວກ້ວໜ້າຂອງມັນນັ້ນ
ມັນກໍ່ວ່າໂອຍກູບໍ່ຢາກຟັງດອກເວີຍ ກູເຄີຍໄດ້ຍິນມາແລ້ວແລະໄດ້ເຄີຍປະຕິວັດມາໄດ້-໓໐-ປີແລ້ວ ຖ້າເຮົາ
ຖາມວ່າສະຫາຍອາຍຸໂຕໄດ້ທໍ່ໃດ ເຂົາໄດ້ຕອບວ່າອາຍຸຫົວກໍ່ໄດ້-໔໗-ປີ ອັນນີ້ແລ້ວເຂົາວ່າຮູ້ກ່ອນອ່ານບັດ
ວ່າພວກຄອມມຸນິສແກວເໜືອເຂົາເຂົ້າມາຢູ່ເມືອງລາວເຕັມເປີດແລ້ວ-ພວກທີ່ຫົວກ້ວໜ້າທັງຫຼາຍນັ້ນ
ກໍ່ພາກັນປົບຕາຍໄປຄືກັນ-ໃນປະເພດຝັນກ່ອນຫຼັບນີ້ ຄືມີຄວາມຮູ້ແຕ່ພຽງປໍ-໓-໔-ພວກເຂົາເອົາຄຳເວົ້າ
ມາດອກລວງວ່າຖ້າໄດ້ປະຕິວັດເສດແລ້ວທັງຄູບາອາຈານແລະປະຊາຊົນ ໃນເຂດບ້ານນັ້ນເມືອງນີ້-ຕ້ອງ
ໄດ້ເປັນເຈົ້າເມືອງເຈົ້າແຂວງ ຕົວຢ່າງຄົນເຂດແຂວງຈຳປາສັກ-ແຂວງເຊໂດນຫຼືແຂວງຕ່າງ ໆ ນັ້ນ ພວກທີ່ປະ
ຕິວັດກໍ່ພາກັນກົ້ມໜ້າກົ້ມຕາປະຕິວັດ ໆ ຫວັງຈະໄດ້ເປັນເຈົ້າເມືອງເຈົ້າແຂວງ-ພໍປະຕິວັດເສັດແລ້ວມັນ
ກໍໄດ້ເປັນແທ້ ແຕ່ບໍ່ເກີນພຽງ-໓-໔-ວັນທໍ່ນັ້ນ ເພາະວ່າຕົນເອງມີຄວາມຮູ້ພຽງແຕ່ປໍ-໓-໔-ທໍ່ນັ້ນເຮັດວຽກ
ເປັນບໍ່ຖ້າເຮັດວຽກບໍ່ເປັນເຂົາກໍ່ເຕະລົງນ້ຳຂອງຫຼືເຕະລົງຂຸມດິນ-ຖ້າວ່າຄົນໃດບອກໄດ້ໄຊ້ຟັງ ມັນກໍ່ພາ
ກັນລ້ຽງໄວ້ໄຊ້ເຮັດວຽກເຮັດງານສືບມື້ໄປ-ແຕ່ບໍ່ໄດ້ມີຄ່າແຮງງານເຕັມເມັດເຕັມໜ່ວຍ ຕຣອດມາ-ແລະ
ພວກມັນໄດ້ບອກວ່າ ໃຫ້ພາກັນຫາກຸ້ມຕົນເອງ-ຕົວຢ່າງເຊັ່ນເງິນເດືອນ ຂ້າຣາຊການທະຫານຕຳຣວດ
ກໍ່ບໍ່ມີລ້ຽງ-ແຕ່ພວກມັນໄຊ້ຄົນລາວຢ່າງເສັຽ ໆ ເພາະພວກເຂົານັ້ນມັກຄົນທີ່ຕີຫຼົບທົບໄດ້ ບອກໄດ້ໄຊ້
ຟັງແລະໄຊ້ທຳງານທີ່ບໍ່ມີເງິນຄ່າຈ້າງຣາງວັນແຕ່ຣະຄົນ ໆ ນັ້ນກໍ່ເຮັດໄດ້ມັນກໍ່ມັກເພາະສະນັ້ນໃນເວລາ
ມັນເອົາໄປສຳມະນາ ມັນບອກວ່າຖ້າໃຜຢາກຟັງກໍ່ໃຫ້ຟັງ-ຖ້າໃຜຟັງໄດ້ກໍ່ໃຫ້ຟັງ-ຖ້າຟັງບໍ່ໄດ້ກໍ່ໃຫ້ຟັງ
ເພາະຄົນລາວມີໜ້າທີ່ຟັງ ຖ້າໃຜຟັງໄດ້ພວກມັນກໍ່ມັກໃຈ-ແລະກໍ່ຊົມເຊີຍ-ພໍຕໍ່ມາມັນກໍ່ພາກັນ
ໄປສືບຫາໃນຈຳນວນພວກດັ່ງກ່າວນີ້-ມີສາຍປະຕິວັດມາຈາກໃສໄປຈາກໃສ-ພວກມັນຄົ້ນ
ຄົ້ວຫາກະທັ້ງຄູບາອາຈານ ກໍ່ບໍ່

ເລືອກຕັ້ງວັນນະ-ສ່ວນຄູບາອາຈານກໍ່ປະຕິວັດກັນໄດ້ທັງນັ້ນ ມັນບອກວ່າຈັ່ງຕັ້ງອັນນີ້ເຂົາໄດ້ບອກວ່າ
ພວກລາວແດງນີ້ມັນມີສອງກົກຫຼືເອີ້ນກັນວ່າມີສອງພັກນັ້ນເອງຄືພັກທີ່ນຶ່ງນັ້ນແມ່ນພັກຂອງສຸພານຸວົງ
ເຂົາເອີ້ນວ່າພັກລາວແດງ-ອີກພັກທີສອງນັ້ນ ແມ່ນພັກຂອງໄກສອນພົມວິຫານ-ເຂົາເອີ້ນວ່າພັກປະຊາ
ຊົນລາວປະທິວັດເຂົ້າພັກຄອມມູນິສວຽດນາມເໜືອ-໑໐໐ %-ພວກລາວກຸ່ມນີ້ມີສອງພັກ ອັນນີ້ ຂໍ
ໃຫ້ພໍ່ແມ່ປະຊາຊົນຄົນລາວເຮົາໄດ້ເຂົ້າໃຈວ່າພວກນີ້ເຂົາມີສອງພັກສອງຝ່າຍແລ້ວແຕ່ຢູ່ໃນການປົກຄອງ
ຂອງວຽດນາມເໜືອ -[ ຄົນລາວເຮົາຄວນຈະພາກັນໝູນຕົວເຂົ້າຫາ-ເພື່ອຈະເຫັນຊ່ອງທາງແລະນະໂຍ
ບາຍຂອງເຂົາ ໃຫ້ມັນສອດຄ່ອງແລະເຫັນແຈ້ງ- ໃນຄວາມຄາດໝາຍຂອງລາວເຮົາ ເພື່ອໃຫ້ໄດ້ເຂົ້າໃນສະ
ພາບການໃດ ໆ ນຳເຂົາ [ ຕໍ່ມາພວກມັນກໍ່ໃຫ້ປະຊາຊົນລາວ ພາກັນສຳມະນາ] ໃນການສຳມະນານັ້ນ
ມັນໃຫ້ສຳມະນາເອກສານການເມືອງທັງ-໕-ເອກສານສ່ວນເອກສານອັນທີ-໑-ນັ້ນມັນວ່າດ້ວຍຄວາມຮັ່ງ
ມີຂອງປະເທດລາວແລ້ວມັນກໍ່ພັນລະນາເຖິງການຮັ່ງມີວ່າ-ປະເທດລາວມີຊັບພະຍາກອນທຳມະຊາດ ຄືມີພູ
ຜາປ່າໄມ້-ນ້ອຍໃຫຍ່ແລະແມ່ນ້ຳນ້ອຍໃຫຍ່ ໄຫຼເຂົ້າສູ່ລຳແມ່ນ້ຳໂຂງມີ-໑໘-ສາຍຫຼືເອີ້ນວ່າ-໑໘-ແຫ່ງນັ້ນ
ເອງ-ເອກສານສ່ວນສະບັບທີ-໔-ນັ້ນມັນວ່າດ້ວຍຄວາມຍາກຈົນຂອງປະຊາຊົນລາວ- ໃນເອກສານສະບັບ
ນີ້ມັນວ່າ ປະເທດລາວກໍ່ມີຄວາມຮັ່ງມີເປັນຫຍັງຄົນລາວຈຶ່ງຍາກຈົນ- ໃນຄຳຕອບຂອງເອກສານສະບັບນີ້
ມັນບອກວ່າເຫດທີ່ຄົນລາວມັນຈົນນັ້ນ-ເພາະວ່າພຣະພຸທເຈົ້າສອນໃຫ້ຈຳນົນຕໍ່ກັມມັນຈຶ່ງຈົນພວກມັນ
ເວົ້າແນວນີ້-ອັນນີ້ແລ້ວຄືພວກມັນພາກັນເດີ້ມກັດຄູບາອາຈານໄປແລ້ວ ໃນຕອນນັ້ນ-ແຕ່ວ່າພວກມັນ
ເວົ້າແບບນີ້ແລ້ວ ຄົນລາວເຮົາພ້ອມທັງຄູບາອາຈານກໍ່ບໍ່ມີໃຜສາມາດຈະຖຽງພວກມັນໄດ້-ພໍພວກມັນ
ເວົ້າໄປນັ້ນ ມັນຖືທັງປືນອາກາມານຳພ້ອມ-ເຮັດແນວໃດພວກຄົນລາວເຮົາໃນຄາວນັ້ນ-ຈຶ່ງສິຖຽງພວກ
ມັນໄດ້ຖ້າວ່າມີຜູ້ຖຽງຢູ່ໃນເວລານັ້ນ-ມັນຕ້ອງເອົາລູກປືນອາກາໃຫ້ສັບປ່ງແນ່ນອນແຕ່ຂັ້ນອາຈານບຸນ
ມາກ-ອາຈານຊາຄຳແດງ-ອາຈານກວ້າງວັດບ້ານໂພນກຸງ ຕາແສງກຸດຈີກ-ພ້ອມທັງພຣະເຈົ້າມະຫາຊີວິດ
ຂອງລາວເຮົາແລະປະຊາຊົນບາງຄົນບາງບ່ອນມັນກໍ່ຍັງເອົາທ້າງປືນອາກາຄວາງໄປເບີດແລ້ວ-ອັນນີ້
ແລ້ວເພີ່ນເວົ້າວ່າປາດຄໄກ່ໃຫ້ລິງເຫັນໄປແລ້ວ-ຜູ້ໃດສິສາມາດຖຽງພວກມັນໄດ້ໃນຄາວນັ້ນ-ແລ້ວພວກ
ມັນກໍ່ເວົ້າຕໍ່ໄປວ່າ ສິໄປເຊື່ອເຮັດຫຍັງ ພຣະພຸທເຈົ້ານັ້ນບໍ່ມີຫຍັງດອກ-ມີແຕ່ຜ້າກະຕ່ຽວຜືນດຽວສິໄປ
ເຊື່ອເຮັດຫຍັງ-ພວກມັນດ່າແບບນີ້ໃນຕອນນັ້ນ-ແຕ່ຄົນລາວເຮົາຢູ່ພາຍໃນປະເທດໃນຄາວນັ້ນກໍ່ຕ້ອງ
ພາກັນນັ່ງຟັງຢູ່ເສີຍ ໆ ເພາະວ່າຖຽງພວກມັນບໍ່ໄດ້ຖ້າວ່າມີຜູ້ໃດຖຽງພວກມັນໃນຕອນນັ້ນ-ມັນກໍ່ຈະ
ຕ້ອງເອົາທ້າງປືນອາກາຄວາງດ້ວຍເພາະພວກນີ້ບໍ່ຖືກົດໝາຍເຂົາຖືເອົາແຕ່ທ້າງປືນ
ອາກາທີ່ນັ້ນ-ສ່ວນເອກສານສະບັບນີ້

ຈອດບໍ່ຕ້ອງແຈ້ວເພາະມັນເອົາແກວມາຂົ່ມຄໍາຄົນລາວເປີດແລ້ວ- ຂ້າພະເຈົ້າຈະຕອບວ່າເຫດຄົນລາວມັນຈົນນັ້ນ-ຈົນເພາະຄົນລາວເຮົາຂີ້ຄ້ຽດການງານ ກິນເຂົ້າທ່ຽງແລ້ວກໍ່ພາກັນນອນຄັນລຸກແຕ່ນອນແລ້ວກໍ່ພາກັນໄປເຫຼັ້ນໄພ້ເຫຼັ້ນໂບກກັນ ອັນນີ້ມັນກໍ່ຈົນແຕ່ຖ້າວ່າໃຫ້ຄົນລາວເຮົາດ່າພຣະພຸທເຈົ້ານັ້ນ-ພວກເຮົາດ່າບໍ່ໄດ້ແທ້ ໆ ແຕ່ວ່າໃຫ້ຄົນລາວເຮົາຖຽງພວກເຂົາໃນຕອນນັ້ນຖຽງບໍ່ໄດ້-ແຕ່ຖ້າມາຖຽງຢູ່ນອກປະເທດພວກເຮົາຕ້ອງສະນະມັນແທ້ ໆ ອັນນີ້ຢູ່ໃນປະເທດລາວນັ້ນ-ຄົນລາວບໍ່ສາມາດຖຽງພວກເຂົາໄດ້ ເພາະວ່າຢ້ານທ້າງປືນອາກາຂອງເຂົາ-ເຫດທີ່ຄົນລາວມັນຈົນຫຼືວ່າຄົນປະເທດໃດກໍ່ຕາມ-ມັນບໍ່ແມ່ນຈົນຍ້ອນພຣະພຸທເຈົ້າໃຫ້ຈົນ ມັນຈົນເພາະພວກເຮົາບໍ່ປະຕິບັດຕ່າງຫາກ ມັນຈຶ່ງຈົນ-ຄໍາຖາມວ່າເປັນຫຍັງມັນຈຶ່ງເປັນຈັ່ງຊີ້-ເຫດທີ່ເປັນຈັ່ງຊີ້ ເພາະຄົນລາວເຮົານັ້ນ-ຖືສາສນາກໍ່ຖືຕາມປະເພນີ ສ່ວນຫຼາຍນັ້ນ ໄດ້ເຄີຍຮຽນຮູ້ທາງສາສນາ ກໍ່ຮຽນກັນມາຍ້ອນປະລິນຍາບໍ່ໄດ້ໄຊ້ໃນຫຼັກສາສນາແຕ່ຖືຕາມປະເພນີ-ອັນນີ້ຈະເວົ້າຕົວຢ່າງເຊັ່ນທຸກໆຄົນຫຼືເດກນ້ອຍກໍ່ດີ ເຂົາຫາຄູບາອາຈານ-ກໍ່ພາກັນຂາບປັນ ໆສາມເທື່ອແລ້ວຖ້າຖາມວ່າເປັນຫຍັງ ຈຶ່ງພາກັນຂາບສາມເທື່ອຄົນ ໆ ນັ້ນເຂົາເຈົ້າຈະຕອບວ່າບໍ່ຮູ້ບໍ່ຈັກແລ້ວ-ເພາະວ່າຜູ້ເຖົ້າຜູ້ແກ່ຫຼືຄູບາອາຈານ ເພິ່ນໃຫ້ພາກັນຂາບສາມເທື່ອຂ້ອຍກໍ່ຂາບ-ອັນນີ້ແລ້ວເອີ້ນວ່າຖືຕາມປະເພນີ-ຖ້າໄດ້ບຸນກໍ່ໄດ້ນ້ອຍ ອັນທີ່ວ່າຮຽນຮູ້ປະລິນຍາມາແລ້ວນັ້ນ ກໍ່ມາພາກັນເທດແຈ້ວແຈວ-ແຕ່ຂໍ້ປະຕິບັດນັ້ນບໍ່ມີ ມັນກໍ່ບໍ່ໄຊ້ທາງສາສນາ-ສ່ວນທາງສາສນານີ້ ຢູ່ກັບການປະຕິບັດປະຕິບັດອັນໃດແນ່-ອັນນີ້ຈະຕອບວ່າໃນການປະຕິບັດນັ້ນ ຕ້ອງປະຕິບັດຢູ່ໃນສິນຢູ່ໃນທັມ-ສິນນັ້ນຄືຂໍ້ຫາມ ທັມມະຄືຂໍ້ປະຕິບັດ-ປະຕິບັດອັນໃດ-ຕ້ອງປະຕິບັດຢູ່ໃນອຸດົມການຂອງຊີວິດ-ພຣະພຸທເຈົ້າຕັດຫ້າມວ່າ ພວກຊາວພຸດນີ້ຢ່າຂ້າສັດຢ່າລັກຊັບຢ່າເຫຼັ້ນຜົວເຂົາຢ່າເຫຼັ້ນເມັຽເຂົາຢ່າມົວເມົາກິນແຕ່ເຫຼົ້າສຸລາຢາຝິ່ນແລະຢ່າກອບໂກງເອົາຂອງຄົນອື່ນມາເປັນຂອງຕົນ-ທີ່ບໍ່ໄດ້ອອກເຫື່ອເຫແຮງຂອງຕົນເອງນັ້ນ-ຄົນເຮົາຕ້ອງຮັກສາໄປຕາມສິນຫ້ານີ້-ຖ້າເຮົາປະຕິບັດໄປຕາມສິນຫ້າໄດ້ ທຸກຄົນຈະບໍ່ເປັນຈັ່ງຊີ້ແລະສັງຄົມມັນກໍ່ຈະບໍ່ວຸ້ນວາຍ ໃນປະເທດເຮົາເຖິງພຽງນີ້-ຄົນເຮົາຊິໃຫ້ພາກັນຖືພຽງແຕ່ສິນຫ້ານັ້ນກໍ່ພໍແລ້ວ-ເພາະສິນຫ້ານັ້ນພຽງພໍແລ້ວ-ສໍາລັບເພິ່ນປົກປັກຮັກສາ ສິດທິຂອງເຮົາເອງແລະສິດທິຂອງຄົນອື່ນບໍ່ໃຫ້ກ້າວກາຍສິດທິຂອງກັນແລະກັນ ມັນກໍ່ພໍແລ້ວ-ແຕ່ເຮົາປະຕິບັດບໍ່ໄດ້ສ່ວນທັມມະນັ້ນ ມີເຖິງແປດໝື່ນສີ່ພັນພຣະທັມມະຂັນ ອັນນັ້ນຫລາຍໄປແລ້ວຖ້າເຮົາປະຕິບັດໃນສິນຫ້ານີ້ໄດ້ກໍ່ພໍແລ້ວແລະມັນຈະບໍ່ທຸກ-ເພາະໃນສິນຫ້ານັ້ນເພິ່ນໄດ້ສອນບອກວ່າ-ຄືນຶ່ງ
ພຸດທະແລະສັມປະທາ ເຖິງຄວາມຂຍັນໝັນພຽນຂໍ້ທີສອງນັ້ນ ຄືອາຣັກຄະສໍາປະທາ
ເຖິງຄວາມເກັບຮັກສາໄວ້-ຂໍ້ທີສາມນັ້ນ ຄືອາຍະມິດ
ຕັດຕາໃຫ້ຄົນເພື່ອນຄົນຝູງ ຄົນທີ່ດີທີ່ງາມ

ข้ํที่สี่นั้นคือสัมมาชีวิตา ให้ลยงชีวิดในทางดีทางชอบถ้าค็นเร็ารักสาทัมมะในสี่ข้ํนี้ได้
มันจะจ็บบ่หฺลีบ่-ข้าพะเจ้าคิดว่าอาดจะบ่มีใผจ็บจักค็นดอก ถ้ารักสาได้-นอกจากนี้แล้วใน
คำสอนของพระพุทเจ้านี้ เพิ่นยังสอนไว้ในทุกแย่ทุกมุมในคำสอนแต่ระข้ํนั้นเป็นอะกาลิโก
คือบ่มีกานล้าสมัย-ส่วนสาสดาอื่น ๆที่เร็ารยนมาเซั่นกานปกคองนั้น มันล้าสมัยได้-เซั่นตัว
ย่างวิชาเอโลเค่ซึ่นในกานสึกสานี้ ที่ค็นรยนมาในห้าสิบปี-ก่อนรยนตามปวัดสาดสังค็มนิยม
ห้าสิบปี-ในปะจุบันนี้ เพาะว่าสังค็มมันปรุ่นแปงไปแล้ว เอโลเค่ซึ่นนี้มันก่ล้าสมัยไปและ
ท่านรยนวิชาอันใดมาถ้าท่านรยนวิชากานปกคองมาในสมัยนี้-พวกเจ้ารยนในสมัยร้อยปี
เจ้าก่อนรยนตามยุกตามปวัดกานของสังค็มในยุกร้อยปี-แต่ในปะจุบันนี้โลกปรุ่นแปงมาหลาย
แล้ว ในปวัดสาดสะบับนี้ มันก่ล้าสมัยไป-แต่พระพุทสาสนาของเร็านั้นเป็นอะกาลิโก-เพาะบ่
มีการปรุ่นแปง ถ้าปะติบัดยามใดก่ต้องได้ผົນยามนั้นเพาะบ่มีกานล้าสมัย-และเพิ่นยังสอนไว้
ว่า ในทุกแย่ทุกมุมให้ดูแลกันสเมิพาบ-เซั่นผัวกับเมยจะปะติบัดต่กันจังใด-พ่แม่กับลูกจะ
ปะติบัดต่กันจังใด-ครูอาจานจะปะติบัดลูกสิดของต็นต่กันจังใด-เพื่อนต่เพื่อนจะปะติบัดต่กัน
จังใด-นายกับลูกน้องจะปะติบัดต่กันจังใดพระพุทเจ้าของเร็าและครูบาอาจาน เพิ่นได้มีคำ
สอนอันดี ๆ มาสอนให้ค็นเร็าฟัง แต่ค็นเร็าบ่พากันฟังและก่บ่ปะติบัดตามต่างหากปะเทด
เร็ามันจึ่งมีการวุ่นวาย และในคอบค็วนั้น ๆ มันเถิงยากเถิงจ็น-อันนี้ถ้าหากว่าข้าพะเจ้า
เว้าจังซี้ค็นแม่นยู่ในปะเทดลาวนั้นแม่นตายไปแล้ว-เพาะปะเทดลาวบ่มีสานตัดสิน-มีแต่
เจ้าเอาลูกปืนอากาตัดสินย่างดยวนั้น-เพาะว่าพวกดั้งกาวนี้เคียตัดสินมาแล้ว เซั่นพระอา
จานชาคำแดงพระอาจานบุนมากพระอากว้างบ้านโพนกุงและพระบาดสົมเด็ดพระเจ้ามะหา
ชีวิดของลาวเร็า-พวกมันก่ยังเอาไปปะหานชีวิดได้ชาหยังค็นเร็าทัมดามันจังชิบ่ข้า-แต่ค็น
ลาวที่ยู่ในปะเทดลาวนั้น-บ่ได้ปากบ่ได้ตอบโต้คยงความของพวกเจ้า-มีแต่พากันหนั่งฟังพวก
มันเว้าหนั้น-ถ้าเว้าได้ มีแต่นึกยู่ในใจและก่ด่ายู่ในใจหนั้นได้ถ้าผู้ใดเว้าออกมาหลือตอบโต้
คยง ความของพวกลาวแดงในคาวนั้นพวกดั้งกาวจะต้องตายไปย่างแน่นอน-(อันนี้แม่นเอก
สานสะบับทีสามว่าดยวนี้ฝรั่งเสสเจ้ามารุกลานลาวเร็าและเอาลาวไปเป็นหัวเมืองขึ้น
พวกมันก่ให้พากันด่าฝรั่งให้ฟัง-ปะชาชົນลาวก่พากันด่านำพวกมันส่วนเอกสานสะบับ
ทีสี่นั้น ว่าดว้ยจักพัดอาเมริกา มาสแวงหาหัวเมืองขึ้นแบบใหม่ในลาวพวก
มันก่ด่าอาเมริกาให้ฟังและพวกมันยังให้

ຄູບາອາຈານ ພາກັນດ່ານຳອີກດ້ວຍ-[ ສ່ວນເອກສານສະບັບທີຫ້ານັ້ນ-ວ່າດ້ວຍຈັກພັດໄທຍທີ່ເປັນ ໝາພານ ຮັບໃຊ້ໃຫ້ຈັກພັດອາເມຣິກາ-ທີ່ມາລຸກລານອິນດູຈີນແລະພວກມັນກໍ່ດ່າໄທຍໃຫ້ຟັງ-ພວກ ມັນເວົ້າແລ້ວ ມັນກໍໃຫ້ຄູບາອາຈານແລະປະຊາຊົນພາກັນດ່ານຳ-ຖ້າຜູ້ໃດບໍ່ດ່າຄືພວກມັນແລ້ວມັນກໍ່ ຖືວ່າຂັດຂວາງມັນ ມັນກໍ່ຈະຕ້ອງເອົາທ້າຍປືນອາກາດຄວາຍຢ່າງທັນທີ-[ ອັນນີ້ຂ້າພະເຈົ້າຂໍອາໄພຍະໂທດ ນຳທ່ານທັງຫຼາຍ ໃນເລື້ອງປະເທດທີ່ໄດ້ເວົ້າມານີ້-ຖ້າວ່າຜູ້ໃດຢູ່ໃນປະເທດລາວນັ້ນ ຕ້ອງໄດ້ດ່າຈັ່ງຊີ້ແລ້ວ ຖ້າບໍ່ດ່າພວກມັນຕ້ອງຫາວ່າ ເປັນປະຕິການຕ້ານການປະຕິວັດຂອງເຂົາສ່ວນເອກສານສະບັບທີຫົກນັ້ນ ວ່າດ້ວຍຈັກພັດຍີ່ປຸ່ນ ຂາຍເສດເສັຍສົງຄາມແລ້ວພວກມັນກໍ່ພາກັນດ່າຍີ່ປຸ່ນໃຫ້ຟັງ-ແລະມັນກໍ່ບອກ ຄູບາອາຈານ ພ້ອມທັງໃຫ້ປະຊາຊົນລາວ-ໃນທຸກຊົນຊາດຊົນເຜົ່າຂອງລາວ ໃຫ້ພາກັນດ່າຄືພວກມັນ ຖ້າໃຜດ່າດີແລະກ້າຫານດ່າທັງພໍ່ທັງແມ່ຂອງຕົນເອງ ພວກມັນແຫ່ງຍ້ອງຍໍ ຊົມເຊີຍແລະກໍ່ຍົກດຳຫຼັບຊັ້ນ ໃຫ້ ສ່ວນຄູບາອາຈານໃນຕອນນັ້ນ ມັນກໍ່ບໍ່ໃຫ້ເຫດວ່າສວັນນິພານຢູ່ໃສມັນກໍ່ບໍ່ໃຫ້ເຫດຢ່າງໃດອັນນີ້ແລ້ວ ເພີ່ນເອີ້ນວ່າພວກມັນທຸບບາດຄູບາອາຈານໄປແລ້ວ-ເພາະວ່າທາງນາຣົກມັນກໍ່ບໍ່ໃຫ້ເຫດ ທາງສວັນນິ ພານມັນກໍ່ບໍ່ໃຫ້ເຫດ-ເລື້ອງອັນໃດມັນກໍ່ບໍ່ໃຫ້ເຫດມີແຕ່ພວກມັນບອກວ່າ ໃຫ້ເລືອກຫາຄຳສອນ ຂອງ ພຣະພຸທເຈົ້າທີ່ເຂົ້າກັນໄດ້ ກັບຄຳສອນຂອງທ່ານມາກມາເທດສ່ວນໃນຂໍ້ຄວາມຂອງຄອມມຸນິສນັ້ນ ຖ້າພວກເຮົາເອົາມາປຽບເຂົ້າໃສກັນກັບທາງສາສນາພຸດແລ້ວ-ມັນອາດບໍ່ຄືກັນ ທຳມະດາແລ້ວມັນເຂົ້າ ກັນບໍ່ໄດ້ ຖ້າໃຜຢາກເຂົ້າໃຈເນື້ອໃນ ໃຫ້ພິສູດເບິ່ງວ່າມັນເໝືອນກັນບໍ່-ຖ້າໃຜຮູ້ຈັກຣະບອບຄອມມຸນິສ ນັ້ນແລ້ວ-ຄົນເຮົາຕ້ອງໃຫ້ໝູນເຂົ້າໃສ່ມັນ ໃຫ້ໄດ້ ເພື່ອໃຫ້ຮູ້ຈັກເນື້ອໃນຄອມມຸນິສຢ່າງຈຸດແຈ້ງ-ກັບ ສາສນາພຸດເຮົານັ້ນມັນເໝືອນກັນແທ້ບໍ່-ເພາະວ່າໃນຄຳສອນ ຂອງພຣະພຸທເຈົ້ານັ້ນ ເປັນແນວຄິດໃອ ເດັຍ-ແນວຄິດໃອເດັຍນັ້ນຄືເປັນລັ້ນສັນຕິນິຍົມ-ສ່ວນຄຳສອນຂອງທ່ານມາກ ເປັນແນວຄິດຄອມພິວເຕີ້ ເພາະສະນັ້ນ ພຣະພຸທເຈົ້າຈຶ່ງໄດ້ສອນໄວ້ວ່າ-ນະໂມພຸດທັງ-ທັມມະທັມມັງ-ມະໂນເສດຖາ-ມະໂນມະຍານະ ພາເຈພຣະເຖຣະຕິ-ວາມະພຣະສີຕັງວາໆພຣະສີໂຫປະທັງ-ອັນນີ້ທ່ານທັງຫຼາຍພາວະທັງຫຼາຍສິ່ງທັງຫຼາຍ ໃຫ້ມີໃຈເປັນໃຫຍ່ ໃຫ້ມີໃຈເປັນຫົວໜ້າ ໃຫ້ມີໃຈເປັນສະພາບກ່ອນຍົກເອົາຫົວໃຈເປັນໃຫຍ່ນັ້ນ-ທ່ານ ມາກບອກວ່າໃນໂລກນີ້ບໍ່ມີອັນໃດ ນອກຈາກວ່າມະນຸດທຳມະດາເທົ່ານັ້ນ ການປ່ຽນແປງທາງດ້ານຈິດ ໃຈນັ້ນມີຜົນສະທ້ອນມາຈາກວັດຖຸໄດ້ແກ່ວັດຖຸເປັນເຄື່ອງດູດຈິດໃຈເປັນ ເຄື່ອງປ່ຽນຈິດໃຈ-ພວກມັນເວົ້າ ຈັ່ງຊີ້ ເພາະສະນັ້ນມັນຈຶ່ງເຂົ້າກັນບໍ່ໄດ້ໃນຣະບອບຄອມມຸນິສ ກັບສາສນາພຸດຂອງເຮົາ-ສ່ວນສາສນາ ພຸດນັ້ນ ບໍ່ຄືກັນກັບຣະບອບຄອມມຸນິສ-ເພາະສະນັ້ນໃນຄຳສອນຂອງທ່ານມາກ ທັງສີ່ຂໍ້ນີ້ເປັນຄຸນ ສົມບັດຂອງສະມາຊິກພັກຂອງເຂົາ-ພັກເຂົາບອກວ່າ ໃນສະມາຊິກນັ້ນຕ້ອງປະຕິບັດ

ໃນຫຼັກການສີ່ຂໍ້ນີ້-ຄືຂໍ້ທີນຶ່ງ ມັນບອກວ່າສະມາຊິກຂອງຄອມມຸນິສນີ້ -ຈະບໍ່ມີຣັດທິເອກຊົນແຕ່ເປັນ ຂອງກູບໍ່ໄດ້-ອັນນີ້ທາງພຣະພຸທເຈົ້າຂອງເຮົາເພິ່ນກໍ່ສອນໄວ້ວ່າບໍ່ໃຫ້ມີອຸປ ທານການເຂົ້າໄປຍຶດຖື ເພາະ ຕົວຍຶດຖືນັ້ນມັນເປັນຕົວທຸກຂໍ້ທີສອງທ່ານມາກສອນບອກວ່າ ບໍ່ໃຫ້ມີຣັດທິຊົນຊາດທ້ອງຖິ່ນ ບໍ່ໃຫ້ ເວົ້າຄົນລາວ ຄົນຂເມນຄົນໄທຍຄົນວຽດນາມ-ເພາະມັນຂັດກັບຫຼັກສາກົນກຳມະຊີບອັນນີ້ທາງພຣະພຸທ ເຈົ້າຂອງເຮົາເພິ່ນກໍ່ສອນຄືກັນວ່າ-ສັດທັງຫຼາຍທັງປວງ ເກີດມາໃນໂລກນີ້ ເປັນເພື່ອນເກີດແກ່ເຈັບຕາຍກັນ ທັງນັ້ນຢ່າບຽດບຽນຊຶ່ງກັນແລະກັນເລີຍຂໍ້ທີສາມທ່ານມາກໄດ້ບອກວ່າບໍ່ໃຫ້ຈ່າຍຟຸມເຟືອຍ-ອັນນີ້ທາງ ພຣະພຸທເຈົ້າຂອງເຮົາເພິ່ນກໍ່ສອນຄືກັນວ່າ- ໃຫ້ມີສັນຕິໃຫ້ມີຍຸຕິທັມໃຫ້ຈ່າຍຕາມມີຕາມໄດ້ຣັດທິມາກ ກໍ່ໄດ້ສອນອີກວ່າ ບໍ່ໃຫ້ອວດອົ່ງຄະນົງຕົວ ໃນຂໍ້ທີສີ່ນີ້-ອັນນີ້ທາງພຣະພຸທເຈົ້າຂອງເຮົາ ເພິ່ນກໍ່ໄດ້ສອນຄື ກັນວ່າ- ໃຫ້ມີຄາຣະວະທັມແລະ ໃຫ້ຮູ້ຈັກສູງ ໃຫ້ຮູ້ຈັກຕ່ຳຄືກັນ-ອັນນີ້ພວກເຮົາກໍ່ນຳເອົາມາທຽບທຽມ ຄືກັນ ໃນຂໍ້ຄວາມນີ້ແລ້ວ ໃຫ້ທ່ານທັງຫຼາຍຈົ່ງນຳເອົາໄປພິຈາຣະນາດ້ວຍກັນແນ່ວ່າ-ອັນໃດຜິດອັນໃດຖືກ ຄົນລາວເຮົາຄວນຈະໃຫ້ຮຽນຮູ້ແລະ ໃຫ້ຮູ້ໃນຄວາມຈິງວ່າ ຣະບອບຄອມມຸນິສນັ້ນ ມັນໃຊ້ຄວາມຈິງ ຫຼືບໍ່ຫຼືພວກມັນໃຊ້ແຕ່ຄວາມດອກລວງ ເຊັ່ນພວກມັນນຳເອົານາມຫຣືຮູບພຣະເຈົ້າຟ້າງຸ່ມຂຶ້ນມາໃຫ້ ປະຊາຊົນລາວຊາບ ໃຫ້ວນັ້ນມັນຖືກບໍ່-ຖ້າວ່າມັນຖືກແທ້ອີດີແລ້ວ ເປັນຫຍັງພວກລາວແດງຈຶ່ງບໍ່ເຊີນ ເອົາຣາຊວົງທີ່ຢູ່ປະເທດຝຣັ່ງເສສມາຣ່ວມນຳ-ເພາະວ່າເພິ່ນກໍ່ເປັນເຊື້ອສາຍພຣະເຈົ້າຟ້າງຸ່ມຄືກັນ-[ອັນນີ້ ແລ້ວພວກເຮົາຈຶ່ງໄດ້ເວົ້າວ່າ-ລາວຄອມມຸນິສ ດອກລວງປະຊາຊົນຂອງຕົນເອງ-ເພາະວ່າຕົນເຄີຍປານ ປາມສັກດິນາມາແລ້ວ-ພຣະອົງກໍ່ອາດຈະເປັນສັກດິນາ-ເພາະວ່າລູກຫລານຂອງເພິ່ນ ພວກລາວແດງ ຄອມມຸນິສກໍ່ວ່າສັກດິນາອັນນີ້ຖ້າເວົ້າຈັ່ງຊີ້ ຄົນແມ່ນຢູ່ໃນປະເທດລາວ ພວກເຂົາກໍ່ຕ້ອງວ່າຄົນຜູ້ນີ້ຈະ ໃຊ້ໄດ້ແຕ່ວ່າຕໍ່ໄປນັ້ນ ພວກເຂົາຕ້ອງຈັບປືນອາກາຍ່າງຮຽງຂ້າງຢ່າງແນ່ນອນ-ຄົນພວກເຮົາຈະຖາມເຂົາ ວ່າ-ສະຫາຍພວກໂຕມານຳເຮົາແບບນີ້ ບໍ່ແມ່ນໂຕມາຄຸມເຮົາບໍ່ ຖ້າພວກມັນຕອບ ມັນຈະຕອບວ່າ ບໍ່ແມ່ນດອກ-ພວກເຮົາມານຳນີ້ ເພາະວ່າທາງຂັ້ນເທິງໃຫ້ມາອາຣັກຂາແລະມາປ້ອງກັນ ເພື່ອບໍ່ໃຫ້ພວກ ປະຕິການແລະພວກບໍ່ຫວັງດີ ເຂົ້າມາຫາ ເພາະທ່ານນີ້ເປັນຄົນສຳຄັນ-ຫຼຽວຈັກນ່ອຍພວກປະຕິການ ມັນຈະມາຂ້າຖິ້ມ-ແຕ່ພວກເຮົາມາຄິດເບິ່ງແລ້ວວ່າ ພວກມັນຕ້ອງມາຄຸມເຮົາຢ່າງແນ່ນອນ-ເພາະພວກ ເຂົາຖືວ່າຄົນລາວທີ່ອອກຈາກປະເທດໃນປີ-໑໙໗໕-ນັ້ນຫຣືພວກເຂົາເອີ້ນວ່າປະຕິການນັ້ນ-ຖ້າເປັນຈັ່ງ ຊີ້ແລ້ວ ໃນຫລັກການພັກຄອມມຸນິສຂອງເຂົານັ້ນ-ອັນນີ້ແມ່ນພວກເຂົາມາຄຸມເຮົາຢ່າງແນ່ນອນເລີ- ອັນນີ້ແລ້ວເຂົາເອີ້ນວ່າ ຄວາມສົງບທາງກາຍ-ແຕ່ທາງໃຈພວກເຂົາບໍ່ມີໄດ້ປະແທ້ ໆ ເພາະວ່າຣະບອບ ຄອມມຸນິສນີ້ ເຂົາຖືວ່າຄົນໃດມີການຂັດຂວາງຕາມນະໂຍບາຍຂອງເຂົານັ້ນ ເຂົາຖື

ວ່າເປັນສັດຕູຕຣອດເວລາແລະຜູ້ທີ່ຕໍ່ຕ້ານການປະຕິວັດຂອງເຂົາ-ອັນນີ້ແມ່ນເວົ້ານຳຕາມໂຄງການຂອງ
ເຂົາ-ພໍຕໍ່ມາພວກເຂົາກໍໃຫ້ຄົນຂອງເຂົາມາຫາປຸກຣະດົມມວນຊົນໃນຕາມໝູ່ບ້ານຕ່າງ ໆ ໃນການປຸກ
ຣະດົມນັ້ນພວກມັນກໍ່ມີແຕ່ໃຫ້ປະຊາຊົນດ່າຈັກພັດອາເມຣິກາ-ປະຊາຊົນກໍ່ພາກັນດ່າຖືກັນກັບພວກ
ມັນ ຖ້າມາທາງເຂດຕໍ່ຊາຍແດນໄທຍ-ພວກມັນກໍໃຫ້ພາກັນດ່າຈັກພັດໄທຍ-ຖ້າບໍ່ດ່ານຳພວກມັນແລ້ວ
ກໍ່ປ້ານທ້າຍປືນອາກາຂອງເຂົາຫຼາຍກວ່າ-ຕໍ່ມາພວກມັນກໍ່ວ່າຜູ້ໃດດ່າດີ ຕອ້ງສັບສນູນຊົມເຊີຍ-ຄຳທີ່
ມັນບອກນັ້ນມັນກໍ່ວ່າ ໃຫ້ພວກສະຫາຍມາເປັນສະມາຊິກແກ່ນນຳຂອງມັນ-ແລ້ວມັນກໍໄດ້ເວົ້າວ່າ
ໃນທຸກຄົນກໍໃຫ້ພາກັນລ້ຽງດູໃຫ້ດີໆ ໃນ ຄົນຈຳນວນນີ້-ແຕ່ໃນຄຳວ່າລ້ຽງດູໃຫ້ດີ ໆ ນີ້ ພວກມັນສິ
ເອົາອັນໃດມາລ້ຽງອັນນີ້ຂ້າພະເຈົ້າຈະຕອບວ່າ- ໃນການລ້ຽງດູໃຫ້ດີ ໆ ນັ້ນ ອາດຈະເປັນຄືກັນກັບທ່ານ
ອາຈານຊາຄຳແດງ ທ່ານອາຈານບຸນມາກ ທ່ານອາຈານກວ້າງແລະພຣະເຈົ້າຊີວິດຂອງລາວເຮົານັ້ນແລ້ວ
ພວກມັນກໍ່ນຳເອົາລູກປືນອາກາໄປລ້ຽງດູເບີດແລ້ວອັນນີ້ແລ້ວ ໃນຄຳວ່າ ໃຫ້ລ້ຽງດູ ໃຫ້ດີ ໆຂອງພວກ
ລາວແດງ ພວກນີ້ຕອ້ງໃຊ້ແບບນີ້ຕຣອດມາ-ພໍຕໍ່ມາກໍ່ມີລາວແດງໂຕໝາກໃຫ່ຍເພີ້ເວີ້ ຄືຄົນນັ້ນແມ່ນ
ຄຳໄຕນັ້ນເອງ ເຂົານັ້ນເປັນຄົນສະມາຊິກ ຂອງພັກໄກສອນຢ່າງເຕມ-໑໐໐ % ໄດ້ລົງມາໃນສີແຂວງພາກ
ໃນຄັ້ງນັ້ນ-ຄົນນີ້ໄດ້ມີເອກສານສະບັບໜຶ່ງ ໄດ້ຖືລົງມານຳ-ແລ້ວໄດ້ມາອ່ານໃຫ້ຄົນສຳຄັນຄົນ ໆ ນຶ່ງ
ຂອງເຂົາວ່າ ອັນນີ້ແມ່ນເອກສານ ທີ່ຊີ້ບົດປືນແລະບົດກຳລັງຝ່າຍວຽງຈັນ-ນາຍຄຳໄຕໄດ້ບອກຜູ້ກ່ຽວວ່າ
ນັບແຕ່ນີ້ເປັນຕົ້ນໄປແຕ່ພວກເຮົາມາຄິດເບິ່ງວ່າ ຊິເຮັດຈັ່ງໃດທະຫານລາວຝ່າຍ ຂວາມີທັງ-໗-ໝື່ນກວ່າຄົນ
ແຕ່ສ່ວນທະຫານລາວແດງມີບໍ່ພໍທໍ່ໄດໝື່ນຄົນ-ພວກເຮົາຄິດວ່າມັນສິສູ້ທະຫານຝ່າຍ ຂວາໄດ້ຈັ່ງໃດ ນັ້ນ
ສຸດທ້າຍມາພວກເຂົາກໍ່ເຮັດໄດ້ແທ້ ໆ ອັນນີ້ແລ້ວພວກເຮົາທາງຝ່າຍຂວາ ຢ່າຄິດວ່າລາວແດງມັນໂງ່ເລີ ເພາະ
ສະນັ້ນມັນຈຶ່ງໄດ້ມາດອກລວງ ພວກປະຕິການໃຫ້ຫລົງກົນອຸບາຍເໝືອນດັ່ງມັນວາງໂຄງການ-໑໗-ຂໍ້ນັ້ນ
ແລ້ວ ໃນວິທີການເປັນຈັ່ງຊີ້ແລ້ວ-ຂ້າພະເຈົ້າຕອບໄດ້ວ່າ ເມື່ອເຂົາເຂົ້າມາປະສົມກັບນັ້ນ-ມັນກໍ່ມາຢູ່
ທີ່ຕັ້ງອັນດຽວກັບແລະມາຢູ່ຄ້າຍດຽວກັນ-ແຕ່ສາຍ ງານໃນການບັງຄັບບັນຊານັ້ນ-ມັນຍັງເປັນຂອງໃຜ
ຂອງມັນຢູ່ແລະຍັງບໍ່ ໄດ້ຂຶ້ນຕໍ່ກັນ ແຕ່ໃນຄະນະນັ້ນພວກນາຍພົລນາຍພັນຂອງລາວແດງນີ້ມັນມີກົນ
ອຸບາຍເອົາຄົນດີມາເປັນຄົນຊົ່ວ-ແທນທີ່ພວກມັນຈະເຂົ້າໄປຮວມພັນທະມິດກັບນາຍພົລນາຍພັນ
ຂອງຝ່າຍຂວານັ້ນບໍ່ມີ-ແຕ່ພວກນາຍທະຫານຂອງລາວແດງໃນຄະນະນັ້ນ-ເຂົາບໍ່ສົນໃຈເລີຍ ກັບພວກ
ເຈົ້ານາຍຝ່າຍຂວາ ແຕ່ພວກມັນໃຊ້ຍຸດທະວິທີຂອງແກວ-ແກວບອກວ່າໃຫ້ເຂົ້າໄປຫາພວກນາຍສິບນາຍ
ຈ່າ-ເພື່ອຈະເອົາໄຊຊະນະທາງການເມືອງແລະໃຫ້ພາກັນເຂົ້າຫາທະຫານດ້າ ໆພຸ້ນ-ຖ້າວ່າພວກມັນຈະ
ເຂົ້າຫາທາງຂ້າຣາຊການໃຫ່ຍ ໆ ເຂົາຕອ້ງເສັຍການເມືອງ

ของเจ้า-เพาะว่านะโยบายการเมืองของเจ้านั้น-มันต้องให้ปะนีปะนอมกับคนจนหรือคนปาก
ต้งและคนที่ถืก มีบันหา มา-เพาะสะนั้นพวกมัน จึ่งต้องเจ้าหาปะซาซน ผู้ที่ยากจนหรือผู้ที่
เห็นหมากไม้ที่มันจะสุกถ้าสุกง่ายได้กูตองกินง่ายนั้น-เพาะสะนั้นลาวแดงมันจึ่งบ่เจ้าหาคนที่มี
หัวคิดและสมองใส-คนที่เป็นเจ้าเมืองเจ้าแขวงนั้นมันบ่กล้ว แต่ส่วนนายพลนายพันของ
ลาวแดงนี้ มันแนมเห็นพวกนายสิบนายจ่าของฝ่ายขวานั้น-ถ้าเป็นคนแก่-ฝ่ายนายลาวแดง
มันก็พากันเจ้าไปหาแล้วก็ให้เว้าว่าอ้ายเอีย ให้เจ้า ขอเป็นน้องรักอ้ายแพงสี้ได้บ่-ทางฝ่ายนาย
สิบนายจ่า ของฝ่ายขวาคนนั้น-ก็ดีอกดีใจหลาย เพาะว่าพวกเราอยู่มาแต่ก่อนกับเจ้ากับนายของ
เรามาแล้วนั้น ยังบ่มีจักเทื่อว่า ท่านนายพันคนนั้นท่านนายพันคนนี้-บ่มีจักเถิงมาเว้านำพวก
เราแบบนี้จักเทื่อ-เราได้เป็นทะหานมานี้ ได้-๑๐-๔๐-ปีแล้วจั้นก็บ่ได้ พ่ได้พยงแต่เป็นนาย
สิบนายจ่าที่นั้น-แต่ดยวนี้พวกฝ่ายนายพลนายพัน ของลาวแดงเจ้าเจ้ามานับ เจ้าก็ยังมาขอ
เป็นเพื่อนรักอ้ายแพง ตั้งแต่ดาวก่อนมา พวกเจ้านายของเราเคยอยู่นำกันมาแท้ ๆ ยังบ่มาพัว
พันกับพวกเราคือจั่งซี้-อันนี้ข้าพะเจ้าขอเว้าแต่สะเพาะอยู่ทางเขดพาก-๔-นายพลลาวแดงพวก
นี้มันก็ไปหาทะหานหรือนายสิบนายจ่า ของฝ่ายขวา-พ่ส่ำอ้าย มันก็ขอเป็นน้องรักถ้าเป็น
ทะหานทำมะดาแล้ว-นายพลลาวแดงนั้นมันก็ขอเป็นอ้ายรักของพวกทะหาน ฝ่ายขวาถ้า
ว่าอายุส่ำกัน-มันก็ขอผูกแขนเป็นซ่ยวหรือเว้าในพาสาของลาวแดง เขาเอิ้นว่าสะหายถ้าว่า
พวกมันเอิ้นสะหายนั้น ในความหมายของพวกเขาแม่นคน ๆ นั้นก็จะตายต่างกันได้ เขา
จึ่งเอิ้นว่าสะหาย-แต่พวกท่านมาเอิ้นกันอยู่ในปะเทดอาเมริกาหรือในปะเทดไทย ท่านอาด
จะปากแตกก็เป็นได้อันนี้มันคนระดับ คนระตำแหน่งเล-อันที่ว่านายสิบนายจ่าของฝ่ายขวา
นี้เห็นว่าฝ่ายนายพลนายพันของลาวแดง-เจ้ามาผูกมิดติดพันนำเพิ่น-เพิ่นก็พากันดีอกดีใจ
และคิดว่า นายพลเขานี้มันดีแท้ ๆ เพาะว่าพวกเขานี้บ่ถือเนื้อถือตัว-บ่เป็นขุนสึกสักดินา เพาะ
ว่าพวกเราพ่เป็นแต่พยง นายสิบนายจ่าที่นั้น-พวกเขาก็ยังมาดีกับเรา แต่พวกนายเรานั้นติ
อยู่นำกันได้ตั้งสิบซาวปีมาแล้ว-ยังบ่ได้เว้านำกันเลีย อันนี้แล้วฝ่ายทะหานลาววยงจันของ
พวกเรา จึ่งมาพากันเปิดหน่ายหนังหน้านายของตนเอง-อันนี้แล้วมันเป็นนะโยบายทางกาน
เมือง-เพาะสะนั้นเพิ่นจึ่งได้เว้าว่า เฮ็ดกานเมืองบ่แม่นเหล้นกานเมือง-แต่พวกมันเจ้ามา
พัวพันแบบนั้นแล้ว พ่ปะมานได้เถิงสองสามเดือน-มันก็อ่านนีใสใจคนของฝ่าย
ขวาได้-แล้วพวกมันคิดว่า

ຜູ້ນີ້ຕ້ອງໃຊ້ໄດ້ໃນທາງນີ້-ແລະນາງສີນຄົນນີ້ ກໍ່ຈະໃຊ້ໄດ້ໃນທາງນັ້ນ-ນາງຈ່າຄົນນີ້ຈະໃຊ້ໄດ້ໃນທາງນີ້ ພວກມັນກໍ່ອ່ານນິໃສອອກເບີດແລ້ວ ເຫດທີ່ອ່ານນິໃສອອກນັ້ນ ໃນຣະບອບຄອມມູນິສນັ້ນ ມັນມີ ປຶ້ມຄູ່ມືຫົວນຶ່ງ-ເຂົາເອີ້ນວ່າໜັງສືສັດຈະວິພາກ ໃນການຈຳແນກຊົນຊັ້ນ ໃນການຈຳແນກເຫດການ ໃນ ການຈຳແນກສະພາວະການ ໃນການຈຳແນກວັດຖຸນິຍົມວິພາກ ສຳລັບໜັງສືສະບັບນີ້ ຖ້າໃຜອ່ານຈົບ ແລ້ວຄົນ ໆ ນັ້ນຈະຕ້ອງມີຄວາມສາມາດຣະອຽດ ໃນດ້ານວິທະຍາການພໍສົມຄວນແລະພໍສາມາດ ອ່ານຄົນນັ້ນອອກໄດ້ອ່ານຄົນນີ້ອອກໄດ້ ວ່າຄົນໃດຄິດຈັ່ງໃດ-ແລະຄົນໃດມັນຈະຄິດຈູງເຂົ້າປ່າໄດ້ ພວກ ມັນໃຫ້ພາກັນອ່ານໃຫ້ອອກໃຫ້ໄດ້ທຸກ ໆ ຄົນໃນສະມາຊິກຂອງພັກຄອມມູນິສຂອງເຂົານັ້ນແລ້ວ ໃຫ້ຄິດເບິ່ງວ່າ-ນາງສີນຄົນນັ້ນທາດແທ້ມັນເປັນຄົນຈັ່ງຊີ້ ນາງຈ່າຄົນນີ້ທາດແທ້ມັນເປັນຄົນຈັ່ງຊີ້- ແລະມັນຈະສາມາດໝູນໃຊ້ໄດ້ຫຼືບໍ່ແລະຈະສາມາດໃຊ້ເປັນປະໂຍດໄດ້ຫຼືບໍ່-ພວກມັນຄິດຈັ່ງຊັ້ນ ມັນກໍ່ເຂົ້າໄປຄ້ຳປະກັນເລີຍແລ້ວພວກມັນບອກວ່າ ທ່ານນາງຈ່າເອີຍເຈົ້າຈະເປັນນາງຈ່າແກ່ເຖົ້າແກ່ ຕາງໄປຈັ່ງຊີ້ບໍ່ ເຈົ້າບໍ່ຢາກເປັນນາງພົນນາງພັນນຳເຂົາບໍ່-ຖ້າເຈົ້າຕ້ອງການເຈົ້າຈະປະຕິວັດໃຫ້ໄດ້ ຖ້າປະຕິວັດເສດແລ້ວ ເຈົ້າຕ້ອງໄດ້ເປັນແທ້ ໆ ພວກມັນກໍ່ຄ້ຳປະກັນຄຳໝັ້ນສັນຍາ ກັບນາງສີນ ນາງຈ່າຂອງທາງທະຫານ ຝ່າຍຂວາແຕ່ພວກທະຫານທາງຝ່າຍຂວາ ກໍ່ບໍ່ຮູ້ນະໂຍບາຍການເມືອງແລະ ການທະຫານທັນພວກລາວແດງ-ພວກເພິ່ນກໍ່ພາກັນຮັບວ່າເຮັດກໍ່ເຮັດ ປະຕິວັດກໍ່ປະຕິວັດຖ້າມັນ ເປັນຈິງ-ພໍຍອມຮັບໃນຂໍ້ນີ້ແລ້ວ ພວກລາວແດງຄອມມູນິສ ກໍ່ເອີ້ນເອົາຝ່າຍທະຫານຂອງວຽດນາມ ເໜືອເຂົ້າມາເພີ້ມເຕີມ ຕໍ່ມາແກວມັນກໍ່ພາກັນໂຫເຂົ້າມາປະເທສຈີນເຕມໄປເບີດ ແນມໄປໃນປ່າ ທາງໃດກໍ່ມີແຕ່ວຽດນາມເໜືອເຕມໄປເບີດຕາມທົ່ງໄຮ່ທົ່ງນາແລະບ່ອນສຳຄັນນັ້ນ ແມ່ນຢູ່ເຂດຫ້ວຍ ບັງລຽງເຂດຫຼັກ-໔໑-໔໔-ຂຶ້ນໄປຫາປາກຊ່ອງອອກໃສ່ເຂດບ້ານຫ້ວຍຊາຍຂຶ້ນໄປຫາເຂດເມືອງທ່າແຕງ ແລະເດົ່ງາມ-ທາງເຂດເມືອງປາກຊ່ອງລົງໄປຫາເມືອງຫ້ວຍກອຍູ່ແຖວເຂດບ້ານນ້ຳຕ້າງ ບ້ານໜອງ ເຊືອງ ອອກໃສ່ບ້ານໜອງແສງເຂດຕີນພູຫລວງເຕມໄປເບີດ-ອັນນີ້ແລ້ວເຂົາເອີ້ນວ່າການເມືອງພາຍໃນ ຕໍ່ມາພວກມັນກໍ່ໄປຍຸແຍ່ນາງຈ່າ ແຕ່ສ່ວນນາງຈ່ານັ້ນເພິ່ນກໍ່ຢາກເປັນ-ຜ ບ-ແລ້ວເພິ່ນກໍ່ພາກັນລວບ ລວມນາງສີນນາງຈ່າຄືກັນ ແລ້ວເອົາປືນໄປຈີ້-ຜ ບ-ຂອງຕົນເອງອອກ-ພໍອອກແລ້ວພວກຄອມມູນິສ ລາວແດງ-ເຂົາກໍ່ຕັ້ງໃຫ້ເປັນ-ຜ ບ-ພັນແບບອັດໂລມັດ ເພາະສະນັ້ນຈຶ່ງໄດ້ເວົ້າວ່າຄົນລາວເຮົາ ບໍ່ເຂົ້າ ໃຈການເມືອງ ມີແຕ່ຢາກໄດ້ໜ້າໄດ້ຕາລູກດຽວທີ່ນັ້ນທຽບວ່າມື້ນີ້ມີຊີດດຽວຢູ່ໃນປ່າ-ມື້ອື່ນມາມີ ສາມດາວຢູ່ໃນບ່າຄໍເສື້ອ ວ່າເປັນ ຜ ບ-ພັນພໍໄດ້ເປັນ-ຜ ບ-ພັນແລ້ວກໍ່ຢາກເປັນ- ຜ ບ-ພົນໄປອີກ ພວກລາວແດງກໍ່ໄປຍຸແຍ່ ໃຫ້ນາງສີນມາພາກັນເດີນຂະບວນປະທ້ວງໃສ່-ຜ ບ-ຣອ້ຍອອກໄປ ພໍ

ຜ ບ-ຮ້ອຽຄົນນັ້ນອອກໄປແລ້ວ ນາຽສິບຄົນນັ້ນກໍໄດ້ເປັນ-ຜ ບ-ຮ້ອຽຂຶ້ນແທນປັນອັນນີ້ແມ່ນໃນ ແບບການປະຕິວັດ ທາງທະຫານຕາມດຳຫຼັບກອງຮ້ອຽກອງພັນໃນເຂດນອກໆ ນັ້ນ-ສ່ວນກອງພົນຈະ ມີການປະຕິວັດໄປຕາມຂັ້ນຕອນ-ຢ່າງເຊັ່ນເມືອງປາກເຊເປັນຈຸດກອງພົນ ໃນນັ້ນກໍ່ມີນາຽພົນຈຸດໃຈ ເປັນຜູ້ບັງຄັບບັນຊາ- ໃນການວິທີການປະຕິວັດຂອງລາວແດງຄອມມຸນິສນັ້ນ ມັນເຮັດຈັ່ງຊີ້ ເຊັ່ນເມືອງ ປາກມັນກໍໄປຍຸແຍ່ເອົາຈ່າໂທກ້ານ ສ່ວນຈ່າໂທກ້ານເປັນຈ່າພົນລົ້ມໃນກອງທັບ-ແຕ່ເລົາເປັນຄົນມັກ ຍ້ອງພວກລາວແດງເຂົາກໍ່ອ່ານອອກແລ້ວ-ພວກເຂົາກໍ່ພາກັນໄປຍູ້ເລີ້ຽແລ້ວເຂົາກໍ່ເວົ້າກັນວ່າ ໃຫ້ພວກ ມັນສູ້ກັນເອງ-ສ່ວນຈ່າໂທກ້ານນັ້ນແຕ່ກ່ອນກໍ່ເຄີຽເປັນຄົນດັ່ງດັງຢູ່ແລ້ວ-ພໍຕໍ່ມາພວກມັນກໍ່ເຂົ້າຫາພັນ ຕີສຸນທອນ ເພາະພັນຕີສຸນທອນນີ້ເປັນຄົນມີຄວາມຮູ້ເປັນຄົນບໍ່ສໍ້ຣາດບັງຫລວງແລະເລົາກໍໄດ້ເຄີຽໄປ ຮຽນຈົບມາຈາກປະເທດອາເມຣິກາ-ພວກມັນກໍ່ເຂົ້າໄປຍົວະຈ່າໂທກ້ານ ໃຫ້ເຂົ້າໄປຫາພັນຕີສຸນທອນ ແລ້ວໃຫ້ນຳເອົາເງື່ອນໄຂເຂົ້າໄປຫາພັນຕີສຸນທອນ ເພື່ອໃຫ້ເຂົ້າໄປປະຕິວັດຂັບໄລ່ນາຽພົລຈຸດໃຈ ອອກຈາກຕຳແໜ່ງໄປໃຫ້ໄດ້-ສ່ວນພັນຕີສຸນທອນກໍ່ຈະໄດ້ເປັນໃຫ່ຽເປັນໂຕ-ທັງຈ່າໂທກ້ານນີ້ກໍໄດ້ນຳ ເອົາຄຳເວົ້າ ຂອງພວກລາວແດງນັ້ນ ໄປບອກພັນຕີສຸນທອນ-ພໍພັນຕີສຸນທອນເພິ່ນໄດ້ຍິນຄຳນີ້ແລ້ວ ກໍໄດ້ພາກັນໄປລວບລວມຫານາຽຮ້ອຽນາຽພັນມາເຂົ້າຮ່ວມກັນແລ້ວ ກໍ່ພາກັນເອົາປືນເຂົ້າໄປ ຈີ້ທ່ານນາຽພົລສຸດໃຈອອກ ຖ້າເປັນດັ່ງນັ້ນແລ້ວ-ນາຽພົລສຸດໃຈກໍ່ເຫັນທ່າວ່າຈະບໍ່ລອດ ກໍ່ເລີຽ ຂຶ້ນເຄື່ອງບິນໄປລົງເມືອງໄທຍ-ເພື່ອຈະອອກນອກປະເທດດ່ວນ ຕໍ່ມາພັນຕີສຸນທອນເພິ່ນກໍໄດ້ເປັນ-ຜ ບ-ພົລຮຽນຮ້ອຽແລ້ວ-ທັງລາວແດງມັນກໍ່ພາກັນເຂົ້າໄປຍົວະໃຫ້ຈ່າໂທກ້ານອີກວ່າ-ຈ່າໂທກ້ານເອີຽ ໃນສ່ວນຄົນໆ ນີ້ມັນຍັງເປັນຄົນອ່ອນແອຢູ່ ໃນຫຼັກການທາງການຕໍ່ສູ້ນັ້ນມັນບໍ່ມີເລີຽ-ມີແຕ່ຄວາມ ຮູ້ຊື່ ໆ ຄົນທີ່ຈະເປັນ- ຜ ບ-ພົລນັ້ນຄົງຈະແມ່ນຈ່າໂທກ້ານຫັ້ນແລ້ວມັນຈຶ່ງສົມຄວນພໍພວກມັນເວົ້າ ຈັ່ງຊີ້ແລ້ວຈ່າໂທກ້ານກໍໄດ້ຍິນພວກມັນເວົ້າ-ແລ້ວເພິ່ນກໍໄດ້ມາລວບລວມເອົາ ນາຽສິບນາຽຈ່າຄືກັນ ແລ້ວກໍ່ພາກັນເຂົ້າໄປຈີ້ ພັນຕຣີສຸນທອນອອກອີກ-ພວກລາວແດງມັນກໍ່ສົ່ງພັນຕຣີສຸນທອນໄປສຳ ມະນາ ຫາບຂີ້ດິນຢູ່ເມືອງອັດປືພຸ້ນ-ຕໍ່ມາຈ່າໂທກ້ານກໍໄດ້ເປັນ-ຜ ບ-ພົລ ພໍຈ່າໂທກ້ານໄດ້ເປັນ-ຜ ບ-ພົລແລ້ວຈ່າໂທກ້ານກໍ່ທຳງານບໍ່ເປັນ ເພາະວ່າຕົນເອງ ພໍເປັນແຕ່ຂັ້ນນາຽຈ່າທໍ່ນັ້ນ-ສ່ວນຂັ້ນນາຽ ຈ່າກັບຂັ້ນນາຽພົລນັ້ນ ມັນຢູ່ຄົນລະຂັ້ນກັນແລະ ມັນກໍ່ຢູ່ໄກກັນຫຼາຽ- ໃນການທຳງານຂອງຝ່າຽນາຽ ພົລ ຕົນເອງກໍ່ບໍ່ເປັນສາແລ້ວພວກລາວແດງເຂົາກໍ່ຫາເລື້ອງວຸ້ນວາຽຂຶ້ນມາອີກ-ຕໍ່ມາພວກມັນກໍ່ວ່າ ຈ່າໂທກ້ານເອີຽ ໃຫ້ໂຕໄປຮຽນຮູ້ ໃນຫຼັກການປົກຄອງໃໝ່ສາກ່ອນ-ພວກມັນເວົ້າແລ້ວ ມັນ

ກໍ່ເອົາຈ່າໂທກ້ານໄປຮຽນ-ໃນການຮຽນນັ້ນ ມັນກໍ່ເອົາໄປຮຽນຢູ່ນຳບາຍເກົ່າຂອງເພິ່ນເອງ ໃນການໄປ
ຮຽນນັ້ນ ມີແຕ່ມັນໃຫ້ໄປຫາບຂີ້ດິນ ຖົມຖນົນຢູ່ໃນເຂດເມືອງອັຕປືແຕ່ພວກລາວຄອມມຸນິສນີ້
ມັນທຳຢ່າງງ່າຍ ໆ ອັນນີ້ແລ້ວເພິ່ນເອີ້ຍວ່າຄົນລາວບໍ່ມີມັນສມອງ-ໃນຫຼັກການ ການເມືອງຂອງລາວ
ແດງຄອມມຸນິສມີແຕ່ເມົາບຳຍົດຖາບັນດາສັກເທົ່ານັ້ນ[ ຕໍ່ໄປນີ້ຈະກ່າວເຖິງ ພວກນັກສຶກສາ-ທີ່ເຄີຍ
ໄດ້ພາກັນອ່ານໜັງສື ການປົກຄອງ ໃນສອງສາມໃນຂອງລາວແດງຄອມມຸນິສນັ້ນເພິ່ນກໍ່ພາກັນອ່ານຈົນ
ຈົບເບີດແລ້ວພວກເພິ່ນກໍ່ຫລົງຄາໂລມຂອງພວກລາວແດງເຂົາ-ຈົ່ນໄດ້ພາກັນເຕີ້ມຈັດຕັ້ງກັນເປັນຫົວ
ໜ້າ-ເດີນຂະບວນປະທ້ວງ ໄລ່ເຈົ້າແຂວງຄົນເກົ່າອອກ-ສ່ວນພວກລາວແດງມັນເຫັນດັ່ງນັ້ນແລ້ວ ມັນ
ກໍ່ເອົາຄົນຂອງມັນມາແທນປັນຢ່າງເລີກລັບ-ແລ້ວກໍ່ບອກພວກນັກສຶກສາວ່າ ຖ້າພວກເຈົ້າພາກັນໄລ່
ເຈົ້າເມືອງອອກໄປໄດ້ອີກນັ້ນ-ພວກເຈົ້າຈະໄດ້ເປັນເຈົ້າເມືອງແທນພວກເຂົາໂລດ-ຕໍ່ມາພວກມັນກໍ່ໄປ
ຍົວະພວກນັບສາມລໍ້ ຢູ່ເຂດເມືອງປາກເຊ-ແລະພວກໂດຍສານ ຕາມເທດບານ-ພວກເພິ່ນກໍ່ພາກັນດີ
ອົກດີໃຈ ແລ້ວກໍ່ພາກັນມາຕັ້ງເປັນຫົວໜ້າ ເດີນຂບວນປະທ້ວງຂັບໄລ່ເຈົ້າເມືອງອອກອີກ ພວກມັນ
